ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

16-23 ຕຸລາ 2024
ປີທີ 13
ສະບັບທີ 990
ລາຍສັບປະດາ

## ກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ກັບ ໄອປາ



(ສພຊ) - ຕອນບ່າຍວັນທີ 9 ຕຸລາຜ່ານມາ ທີ່ຫໍປະຊຸມແຫ່ງຊາດ, ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ໄດ້ເປັນປະທານກອງປະຊຸມພົບປະລະຫວ່າງອາຊຽນ ແລະ ຜູ້ຕາງໜ້າຈາກສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼືໄອປາ (AIPA) ເຊິ່ງນຳໂດຍທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດໃນນາມປະທານໄອປາ ຄັ້ງທີ 45.

ອ່ານຕໍ່ໜ້າ 7

## ສະຫາຍ ປອ. ໄຊສົມພອນ ພົມວິຫານ ພົບປະນາຍົກລັດຖະມົນຕີຫວຽດນາມ

(ສພຊ) - ຕອນບ່າຍວັນທີ 8 ຕຸລານີ້ ທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ໄດ້ພົບປະກັບສະຫາຍ ຟ້າມ ມິ່ງ ຈິ່ງ (Phạm Minh Chính) ກຳມະການກົມການເມືອງສູນກາງພັກ

ອ່ານຕໍ່ໜ້າ 7



## ສະຫາຍ ປອ. ໄຊສົມພອນ ພົມວິຫານ ພົບປະນາຍົກລັດຖະມົນຕີຈີນ

(ສພຊ) - ເພື່ອເປັນການປະກອບສ່ວນຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ລາວ-ຈີນ, ຈີນ-ລາວ ໃຫ້

ອ່ານຕໍ່ໜ້າ 6



## ປະທານສະພາແຫ່ງຊາດ ພົບປະນາຍົກລັດຖະມົນຕີໄທ



(ສພຊ) - ວັນທີ 8 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ພົບປະກັບທ່ານນາງ ແພທອງທານ ຊິນນະວັດ ນາຍົກລັດຖະມົນຕີ ແຫ່ງ ລາຊະອານາຈັກໄທ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດ

ອ່ານຕໍ່ໜ້າ 8

## ປອ. ໄຊສົມພອນ ພົມວິຫານ ຢ້ຽມຢາມຢູ່ເມືອງຫາດຊາຍຟອງ



ອ່ານຕໍ່ໜ້າ 7

## ບົດນຳ

### ພ້ອມກັນເປັນເຈົ້າພາບທີ່ດີຂອງກອງປະຊຸມ AIPA ຄັ້ງທີ 45

ອ່ານຕໍ່ໜ້າ 9

## ປະທານສະພາແຫ່ງຊາດ ພົບປະ ປະທານລັດຖະສະພາມາເລເຊຍ



(ສພຊ) - ວັນທີ 9 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດ ໄດ້ຕ້ອນຮັບແລະພົບປະກັບທ່ານ ໂຈຮາຣີບິນອັບດຸນ (Johari Bin Abdul) ປະທານລັດຖະສະພາ ແຫ່ງ ມາເລເຊຍ

## ແຈ້ງການ

### ຂອງຄະນະເລຂາທິການສະພາແຫ່ງຊາດ

ໂດຍຕອບສະໜອງຕາມຄຳເຊື້ອເຊີນຂອງສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສະຫາຍ ເຈິ່ນ ແທັງ ເໝິນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ຈະຢ້ຽມຢາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢ່າງເປັນທາງການ ໃນລະຫວ່າງວັນທີ 17-18 ຕຸລາ 2024 ແລະ ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 17-23 ຕຸລາ 2024 ທີ່ນະຄອນຫຼວງວຽງຈັນ, ສປປລາວ.

**ຂ່ຳນັບຮັບຕ້ອນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຢ່າງສຸດໃຈ!**

# ຄະນະປະຈຳສະພາແຫ່ງຊາດ ປະຊຸມສະໄໝວິສາມັນປະຈຳເດືອນຕຸລາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະໄໝວິສາມັນ ປະຈຳເດືອນຕຸລາ 2024 ໄດ້ດຳເນີນໃນວັນທີ 11 ຕຸລາ 2024 ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳສະພາແຫ່ງຊາດ ແລະ ກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນແລະກົດໝາຍເປັນຕົ້ນ ບົດລາຍງານຜົນການຄົ້ນຄວ້າ ແລະ ປັບປຸງເນື້ອໃນຂອງລັດຖະທຳມະນູນ ສະບັບປີ 2015, ບົດລາຍງານຮ່າງແຜນກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ບົດລາຍງານ ແລະ ຂໍທິດຊີ້ນຳບັນຫາພົ້ນເດັ່ນໃນການກະກຽມການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45, ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການສະເໜີຂໍໃຫ້ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງເອົາສັນຍາໂອນຫຸ້ນໂຄງການເຂື່ອນໄຟຟ້າຫີນບູນ ແລະ ບົດລາຍງານກ່ຽວກັບການສະເໜີແຕ່ງຕັ້ງປະທານອົງການກວດສອບປະຈຳພາກເໜືອ.

**(ນາງ ອາລິນ ສຸພົມມະປະດິດ)**

# ກອງປະຊຸມຄົບຄະນະ ຄລຊ



(ສພຊ) - ຕອນບ່າຍວັນຈັນທີ 07 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ໄດ້ມີກອງປະຊຸມຄົບຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ສະບັບປີ2015 (ຄລຊ) ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ, ປະທານຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ; ມີບັນດາທ່ານຮອງປະທານ, ຄະນະປະຈຳການ, ຫົວໜ້າອະນຸກຳມະການຕ່າງໆຂອງຄລຊແລະພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທີ່ກອງປະຊຸມ, ໄດ້ຮັບຟັງລາຍງານຫຍໍ້ຜົນການຄົ້ນຄວ້າ, ວິໄຈ ແລະ ປັບປຸງລັດຖະທຳມະນູນ ປີ 2015 ເຊິ່ງອະນຸກຳມະການເນື້ອໃນ ໄດ້ເອົາໃຈໃສ່, ເປັນເຈົ້າການຜັນຂະຫຍາຍທິດຊີ້ນຳຂອງກອງປະຊຸມກົມການເມືອງສູນກາງພັກທ້າຍເດືອນສິງຫາຜ່ານມາ; ພ້ອມກັນນັ້ນ, ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ອອກຂໍ້ຕົກລົງແຕ່ງຕັ້ງ 6 ໜ່ວຍງານ ເພື່ອຄົ້ນຄວ້າ, ວິໄຈລົງເລິກແຕ່ລະບັນຫາ, ແຕ່ລະເນື້ອໃນຂອງລັດຖະທຳມະນູນ ຕິດພັນກັບທິດຊີ້ນຳຂອງກົມການເມືອງສູນກາງພັກ ແລະ ອະນຸກຳມະການເນື້ອໃນ ໄດ້ສັງລວມຜົນການຄົ້ນຄວ້າຂອງແຕ່ລະໜ່ວຍ; ນອກຈາກນັ້ນ, ຍັງໄດ້ຈັດກອງປະຊຸມຄົ້ນຄວ້າ, ປຶກສາຫາລື ແລະ ຮຽບຮຽງເປັນຮ່າງລັດຖະທຳມະນູນ ເມື່ອທ້າຍເດືອນກັນຍາ ແລະ ຕົ້ນເດືອນຕຸລານີ້ ເພື່ອນຳມາລາຍງານ ແລະ ຂໍທິດຊີ້ນຳໃນກອງປະຊຸມຄັ້ງນີ້.

ຫຼັງຈາກຜູ້ເຂົ້າຮ່ວມໄດ້ຄົ້ນຄວ້າ ແລະ ປະກອບຄຳເຫັນຢ່າງເລິກເຊິ່ງ, ກົງໄປກົງມາ ຕໍ່ບົດລາຍງານຫຍໍ້ດັ່ງກ່າວ; ທ່ານປະທານກອງປະຊຸມໄດ້ມອບໃຫ້ອະນຸກຳມະການເນື້ອໃນຮີບຮ້ອນປັບປຸງຕາມຄຳເຫັນຂອງຄະນະກຳມະການລະດັບຊາດ ເພື່ອໄປລາຍງານຂໍທິດຊີ້ນຳຈາກກອງປະຊຸມກົມການເມືອງສູນກາງພັກ ໃນລະຫວ່າງວັນທີ 14-15 ຕຸລານີ້.

**(ສອນສັກ ວັນວິໄຊ)**

# ກະກຽມເນື້ອໃນສານຂອງປະທານໄອປາ




(ສພຊ) - ຕອນເຊົ້າວັນທີ 9 ຕຸລາຜ່ານມາ ໄດ້ມີກອງປະຊຸມເພື່ອປຶກສາຫາລື ແລະ ພິຈາລະນາເນື້ອໃນສານຂອງປະທານສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ທີ່ຈະມີຄຳເຫັນຕໍ່ບັນດາຜູ້ນຳອາຊຽນ ໃນກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ໂດຍການເຂົ້າຮ່ວມຂອງທ່ານ ນາງ ຊິຕິ ໂຣໄຊເມຣີຢັນຕີ ດາໂຕະ ຮາຈີ ດັບດຸນ ຮາມັນ (Siti Rozaimeriyanty Haji Abdul Rahman) ເລຂາທິການໃຫຍ່ໄອປາ; ມີຄະນະຜູ້ແທນຈາກປະເທດບຣູໄນ, ກຳປູເຈຍ, ລາວ, ມາເລເຊຍ, ຟີລິບປິນ, ສິງກະໂປ, ໄທແລະຫວຽດນາມເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ຈະໄດ້ມີການຜ່ານເນື້ອໃນຂອງສານຂອງປະທານໄອປາ ທີ່ຈະນຳສະເໜີຕໍ່ກອງປະຊຸມສຳຄັນໃນການພົບປະຜູ້ນຳລະດັບສູງຂອງໄອປາ ແລະ ອາຊຽນ. ສະພາແຫ່ງຊາດລາວ ໃນຖານະເປັນປະທານກອງປະຊຸມໄອປາຄັ້ງທີ 45 ນີ້ ເຊິ່ງຈະໄດ້ຈັດຂຶ້ນພາຍໃຕ້ຄຳຂວັນທີ່ວ່າ: "ບົດບາດຂອງລັດຖະສະພາ ໃນການຊຸກຍູ້ການເຊື່ອມຈອດ ແລະ ການຈະເລີນເຕີບໂຕແບບກວມ ລວມຂອງອາຊຽນ" ເຊິ່ງຈະເປັນການເສີມຂະຫຍາຍບົດບາດຂອງໄອປາ ໃນການຊຸກຍູ້ຄວາມພະຍາຍາມຂອງອາຊຽນ ເພື່ອແນໃສ່ຊຸກຍູ້ໃຫ້ປະຊາຄົມອາຊຽນມີຄວາມສາມັກຄີ, ເປັນເອກະພາບ ແລະ ເປັນປະຊາຄົມທີ່ໝັ້ນຄົງ ພ້ອມທັງເພີ່ມທະວີການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ.

ຈຸດປະສົງຕົ້ນຕໍຂອງກອງປະຊຸມນີ້ແມ່ນເປັນການກະກຽມຮ່າງສານຂອງປະທານໄອປາກ່ອນຈະນຳໄປລາຍງານຢູ່ກອງປະຊຸມພົບປະລະຫວ່າງຜູ້ນຳຂອງໄອປາ ແລະ ອາຊຽນ ເຊິ່ງດຳເນີນມາເປັນຄັ້ງທີ 13 ແລ້ວ.

ໃນກອງປະຊຸມກະກຽມນີ້, ທ່ານຮອງປະທານສະພາແຫ່ງຊາດໄດ້ມີຄຳເຫັນກ່າວເປີດ ໂດຍໄດ້ຊີ້ໃຫ້ເຫັນຄວາມສຳຄັນຂອງກອງປະຊຸມ ທີ່ມີໜ້າທີ່ປັບປຸງເນື້ອໃນສານຂອງປະທານໄອປາໃຫ້ມີຄວາມຮັດກຸມ, ຄົບຖ້ວນ ແລະ ຈະແຈ້ງ. ບັນດາຜູ້ເຂົ້າຮ່ວມໄດ້ຕັ້ງໜ້າປະກອບຄຳເຫັນຕໍ່ແຕ່ລະເນື້ອໃນຂອງສານ ແລະ ມີຄວາມເປັນເອກະພາບສູງໃນການຮັບຮອງເອົາສານຂອງປະທານໄອປາຕາມກຳນົດໝາຍ.

ການພົບປະລະຫວ່າງຜູ້ນຳອາຊຽນແລະໄອປາເປັນກົນໄກທີ່ສຳຄັນເພື່ອປຶກສາຫາລືບັນຫາສຳຄັນຂອງພາກພື້ນ ລວມໄປເຖິງບັນດາສິ່ງທ້າທາຍ, ບັນຫາເລັ່ງດ່ວນຕ່າງໆ; ກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ໄອປາ ຈະຊຸກຍູ້ການປຶກສາຫາລືກ່ຽວກັບຍຸດທະສາດການຮ່ວມມືທີ່ມີປະສິດທິຜົນລະຫວ່າງອົງການບໍລິຫານ ແລະ ອົງການນິຕິບັນຍັດ ເພື່ອບັນລຸເປົ້າໝາຍທີ່ໄດ້ວາງອອກໃນວິໄສທັດປະຊາຄົມອາຊຽນ 2025 ເຊິ່ງສອດຄ່ອງກັບພາລະກິດຂອງແຕ່ລະປະເທດ.

**(ນາງ ອາລິນ ສຸພົມມະປະດິດ)**

# ຮອງປະທານສະພາແຫ່ງຊາດ ຮັບການເຂົ້າຢ້ຽມຂ່ຳນັບນາຍພົນຍິງ



(ສພຊ) - ວັນທີ 7 ຕຸລາຜ່ານມາ, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງນາຍພົນຍິງຊຸດທຳອິດຂອງກະຊວງປ້ອງກັນປະເທດ ນຳໂດຍທ່ານ ພົຈວ. ນາງ ໄພວອນ ອິນທະບຸດ ຫົວໜ້າຫ້ອງການສະຫະພັນແມ່ຍິງກອງທັບ, ທ່ານ ພົຈວ. ນາງ ທອງສີ ວົງພະຈັນ ຫົວໜ້າກົມຮັກສາສຸຂະພາບສູນກາງ, ຫ້ອງວ່າການກະຊວງປ້ອງກັນປະເທດ ແລະທ່ານພົຈວ. ນາງມະລິວອນ ສຸລິຍະແສງ ຫົວໜ້າການເມືອງໂຮງໝໍສູນກາງ 103 ກອງທັບ ພ້ອມດ້ວຍຄະນະ ເພື່ອລາຍງານຜົນງານທີ່ແມ່ຍິງກອງທັບຍາດມາໄດ້ ແລະ ເປັນບາດກ້າວທຳອິດໃນໜ້າປະຫວັດສາດ ສປປ ລາວທີ່ແມ່ຍິງສາມາດເປັນການນຳລະດັບສູງຂອງກອງທັບ.

ທ່ານປອ. ນາງສູນທອນ ໄຊຍະຈັກ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ການຖືກເລື່ອນເປັນນາຍພົນຍິງຂອງລາວຊຸດທຳອິດໃນປະຫວັດສາດຂອງຊາດລາວ, ໄດ້ອວຍພອນບັນດາຜົນງານທີ່ເອື້ອຍນ້ອງກອງທັບຍາດມາໄດ້ ອັນເປັນໃບໜ້າໃໝ່ໃຫ້ແກ່ເອື້ອຍນ້ອງຍິງໃນທົ່ວປວງຊົນເວົ້າລວມ, ເວົ້າສະເພາະກຳລັງປະກອບອາວຸດ ພ້ອມທັງສະແດງຄວາມເຊື່ອໝັ້ນວ່າທັງສາມນາຍພົນຍິງ ຈະນຳເອົາຄວາມຮູ້ຄວາມສາມາດ ໄປຊຸກຍູ້ເອື້ອຍນ້ອງແມ່ຍິງທັງພາຍໃນກອງທັບ ແລະ ທົ່ວປວງຊົນ ເຝິກຝົນຫຼໍ່ຫຼອມຕົນເອງ ເພື່ອຍົກສູງບົດບາດຂອງເອື້ອຍນ້ອງໃນສັງຄົມ ເພື່ອເປັນກຳລັງແຮງສຳຄັນຄຽງຄູ່ກັບເພດຊາຍໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ທ່ານ ພົຈວ. ນາງ ໄພວອນອິນທະບຸດ ໄດ້ຕາງໜ້າໃຫ້ຄະນະ ສະແດງຄວາມຂອບໃຈຕໍ່ທ່ານຮອງປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ຄຳຊົມເຊີຍ ແລະ ຄຳເວົ້າອັນຈິບງາມ ພ້ອມທັງລາຍງານໃຫ້ຊາບໂດຍຫຍໍ້ການຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ; ໃຫ້ຄຳໝັ້ນສັນຍາວ່າຈະເອົາໃຈໃສ່ເຝິກຝົນຫຼໍ່ຫຼອມຕົນເອງ, ນຳເອົາຄວາມຮູ້ຄວາມສາມາດທັງໝົດທີ່ມີ ໄປນຳໃຊ້ໃຫ້ເກີດຜົນປະໂຫຍດຫຼາຍທີ່ສຸດ, ຈະເປັນກຳລັງແຮງສຳຄັນໃນການກະຕຸກຊຸກຍູ້ໃຫ້ເອື້ອຍນ້ອງແມ່ຍິງ ໃນການພັດທະນາຕົນເອງໃຫ້ກ້າວໜ້າຂຶ້ນເລື້ອຍໆ ເພື່ອເຮັດສຳເລັດໜ້າທີ່ທີ່ຖືກມອບໝາຍ.

**(ນາງ ອາລິນ ສຸພົມມະປະດິດ)**

# ປະທານສະພາແຫ່ງຊາດ ຮັບການຢ້ຽມຂໍ່ານັບ ຂອງສະຫາຍ ພົທ. ເຈິ່ນ ກວາງ ເຟືອງ



(ສພຊ) - ວັນທີ 8 ຕຸລາ ຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການຢ້ຽມຂໍ່ານັບຂອງສະຫາຍ ພົທ. ເຈິ່ນ ກວາງ ເຟືອງ (Trần Quang Phương) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ໃນໂອກາດນຳພາຄະນະຜູ້ແທນສະພາແຫ່ງຊາດຫວຽດນາມ ຢ້ຽມຢາມ ແລະ ເຂົ້າຮ່ວມກອງປະຊຸມຜູ້ນຳອາຊຽນ-ໄອປາ ຄັ້ງທີ 13 ໃນຂອບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປລາວ ເປັນເຈົ້າພາບ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ການມາເຄື່ອນໄຫວວຽກງານຄັ້ງນີ້ເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມເວົ້າລວມ, ເວົ້າສະເພາະລະຫວ່າງສອງອົງການນິຕິບັນຍັດຂອງສອງປະເທດ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວເຮັດສຳເລັດພັນທະສາກົນໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ຫຼື AIPA-45 ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ; ຕີລາຄາສູງຕໍ່ຜົນການພົບປະເຮັດວຽກຂອງສອງຮອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ເຊິ່ງໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດໃນໄລຍະຜ່ານມາ, ແລກປ່ຽນຄຳຄິດຄຳເຫັນກ່ຽວກັບສະພາບການພາກພື້ນ, ສາກົນແລະພ້ອມກັນປຶກສາຫາລືທິດທາງແຜນການຮ່ວມມືໃນຕໍ່ໜ້າ.

ສະຫາຍ ພົທ. ເຈິ່ນ ກວາງ ເຟືອງ ໄດ້ສະແດງຄວາມຂອບໃຈຕໍ່ປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ ແລະ ຄຳເວົ້າອັນຈົບງາມ ພ້ອມທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບແບບພິເສດ ແລະ ການຮ່ວມມືທີ່ມີໜຶ່ງດຽວໃນໂລກລະຫວ່າງສອງປະເທດ ເວົ້າລວມ ແລະ ລະຫວ່າງສອງອົງການນິຕິບັນຍັດຂອງ ຫວຽດນາມ-ລາວ ເວົ້າສະເພາະ ແລະ ແຈ້ງໃຫ້ຊາບໂດຍຫຍໍ້ສະພາບການທີ່ພົ້ນເດັ່ນຂອງປະເທດຫວຽດນາມ.

**(ອານຸສອນ ພູມມີທອນ)**

# ຮອງປະທານສະພາແຫ່ງຊາດ ລາວ-ຫວຽດນາມ ພົບປະສອງຝ່າຍ



(ສພຊ) - ຕອນບ່າຍວັນທີ 8 ຕຸລາຜ່ານມາ ທີ່ສະພາແຫ່ງຊາດ, ສະຫາຍ ພົທ. ສຸວອນເລືອງ ບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ພົບປະກັບສະຫາຍ ພົທ. ເຈິ່ນ ກວາງ ເຟືອງ (Trần Quang Phương) ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດ ໃນໂອກາດນຳພາຄະນະຜູ້ແທນສະພາແຫ່ງຊາດຫວຽດນາມ ຢ້ຽມຢາມ ແລະເຂົ້າຮ່ວມກອງປະຊຸມຜູ້ນຳອາຊຽນ-ໄອປາ ຄັ້ງທີ 13 ໃນຂອບກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປລາວ ເປັນເຈົ້າພາບ ແລະ ຢູ່ໃນບັນຍາກາດທີ່ສະພາແຫ່ງຊາດລາວພວມຊຸ້ນຂ້ຽວສຸມໃສ່ກະກຽມການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45.

ໃນການພົບປະ, ສອງຝ່າຍໄດ້ສະເໜີທິດທາງການພົວພັນຮ່ວມມືໃນຕໍ່ໜ້າຄື: ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນຈິດ ໃຈຂອງບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ ໃຫ້ເປັນຮູບປະທຳຫຼາຍຂຶ້ນຕື່ມ; ສ້າງແຜນການຕິດຕາມກວດກາຮ່ວມບັນດາໂຄງການພື້ນຖານໂຄງລ່າງ ແລະ ການຊ່ວຍເຫຼືອຕ່າງໆໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ທີ່ຝ່າຍຫວຽດນາມໃຫ້ການຊ່ວຍເຫຼືອລາວ; ຊຸກຍູ້ການຈັດຕັ້ງປະຕິບັດບັນດາສັ້ນຍາ, ສົນທິສັນຍາ ແລະຂໍ້ຕົກລົງລະຫວ່າງສອງລັດຖະບານ ກໍຄືຜົນກອງປະຊຸມຂອງການນຳຂັ້ນສູງສອງພັກ, ສອງລັດ ແລະ ບັນດາໂຄງການຮ່ວມມືຂອງສອງປະເທດ ໂດຍສະເພາະການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດ ໃຫ້ຂະຫຍາຍຕົວສູງຂຶ້ນ ສົມຄູ່ກັບການພົວພັນຮ່ວມມືດ້ານການເມືອງ; ສະໜັບສະໜູນໃຫ້ຄະນະຮັບ ຜິດຊອບລະດັບຊາດທັງສອງຝ່າຍ ໃນການສ້າງປຶ້ມ 50 ປີແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດ ແຫ່ງ ສປປລາວ ແລະ ສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ, ການຮ່ວມມືຮອບດ້ານ ແລະພັດທະນາ ໃຫ້ສຳເລັດຕາມທີ່ໄດ້ກຳນົດໄວ້ ເພື່ອເປັນມໍລະດົກໃຫ້ຄົນຮຸ່ນໜຸ່ມໄດ້ສຶກສາ, ສືບທອດ ແລະ ປົກປັກຮັກສາສາຍພົວພັນແບບພິເສດລາວ-ຫວຽດນາມ ມີໜຶ່ງດຽວໃນໂລກ ໃຫ້ໝັ້ນຄົງຕະຫຼອດໄປ; ແລກປ່ຽນບົດຮຽນກ່ຽວກັບການສ້າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດວຽກງານ ປກຊ-ປກສແລະຊຸກຍູ້ຕິດຕາມວຽກງານຂົງເຂດອື່ນໆ; ສະໜັບສະໜູນ ແລະ ຮ່ວມມືກັນໃນການເຄື່ອນໄຫວໃນອົງການລັດຖະສະພາພາກພື້ນ ແລະ ສາກົນ.

**(ອານຸສອນ ພູມມີທອນ)**

# ສຳມະນາດ້ານເນື້ອໃນກອງປະຊຸມກຳມາທິການວຽກງານສັງຄົມ




(ສພຊ) - ກອງປະຊຸມສຳມະນາດ້ານເນື້ອໃນຂອງກອງປະຊຸມກຳມາທິການວຽກງານສັງຄົມ ເພື່ອກຽມພ້ອມຮັບໃຊ້ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈັດຂຶ້ນໃນລະຫວ່າງວັນທີ 7-9 ຕຸລາ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ບຸນຕາ ເທບພະວົງ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ທ່ານ ນາງ ຫງວຽນເຕື່ອງເວິນ(NGUYỄN Tường Vân) ອະດີດເລຂາທິການໃຫຍ່ໄອປາ, ຮອງປະທານຄະນະອຳນວຍການສູນລັດຖະສະພາອາຊີ (PCAia); ມີບັນດາທ່ານຮອງປະທານກຳມາທິການສະພາແຫ່ງຊາດ, ຮອງລັດຖະມົນຕີກະຊວງທີ່ກ່ຽວຂ້ອງ ພ້ອມດ້ວຍຄະນະຮັບຜິດຊອບ, ກອງເລຂາຊ່ວຍວຽກ ແລະ ຄະນະຜູ້ແທນກອງປະຊຸມກຳມາທິການວຽກງານສັງຄົມ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ໃນຄຳເຫັນກ່າວເປີດ, ທ່ານບຸນຕາເທບພະວົງ ໄດ້ເນັ້ນໜັກເຖິງຈຸດປະສົງຂອງກອງປະຊຸມແມ່ນເພື່ອຍົກສູງຂີດຄວາມສາມາດໃນການເປັນເຈົ້າພາບ ກໍຄືການກະກຽມຄວາມພ້ອມຮອບດ້ານ ເພື່ອຮັບປະກັນທັດສະນະໃນການເປັນປະທານກອງປະຊຸມ, ການກະກຽມເນື້ອໃນຕ່າງໆ, ສ້າງຄວາມເປັນເອກະພາບດ້ານທັດສະນະກ່ຽວກັບຫຼັກການ, ວິທີການ ແລະ ຂັ້ນຕອນການບັນຊາກອງປະຊຸມ ແລະ ການຄົ້ນຄວ້າປະກອບຄຳເຫັນຕໍ່ບັນດາຮ່າງມະຕິຂອງກອງປະຊຸມ.

ໃນການສຳມະນາຕະຫຼອດໄລຍະ 3 ວັນ, ຜູ້ເຂົ້າຮ່ວມໄດ້ຮຽນຮູ້ຄວາມຮູ້ພື້ນຖານກ່ຽວກັບວິທີການເປັນປະທານ, ດຳເນີນ ແລະ ເຂົ້າຮ່ວມໃນກອງປະຊຸມກຳມາທິການດ້ານສັງຄົມຂອງ AIPA; ການກະກຽມຮ່າງມະຕິ, ບົດລາຍງານ, ຄຳເຫັນ; ຮ່າງມະຕິວ່າດ້ວຍການເພີ່ມທະວີການຮ່ວມມືໃນການຄວບຄຸມຢາສູບ ແລະ ຊົມໃຊ້ສານນິໂກຕິນ; ຮ່າງມະຕິວ່າດ້ວຍການສົ່ງເສີມບົດບາດຂອງລັດຖະສະພາກ່ຽວກັບນະວັດຕະກຳການຮັກສາສຸຂະພາບແບບອັດສະລິຍະ; ຮ່າງມະຕິວ່າດ້ວຍການຮ່ວມແຮງຮ່ວມໃຈໃນການປະຕິບັດແຜນງານກ່ຽວກັບສົນທິສັນຍາປລາສະຕິກໂລກ; ຮ່າງມະຕິວ່າດ້ວຍການສົ່ງເສີມສິດ, ສະຫວັດດີການສັງຄົມ ແລະ ໂອກາດໃນການຈ້າງງານຂອງຜູ້ອາຍຸສູງໃນອາຊຽນ; ຂໍ້ມູນກ່ຽວກັບວຽກງານການຄວບຄຸມຢາສູບ ແລະການຊົມໃຊ້ສານນິໂກຕິນຢູ່ ສປປລາວ ແລະ ບົດຮຽນທີ່ດີໃນການຄວບຄຸມວຽກງານດັ່ງກ່າວຂອງບາງປະເທດສະມາຊິກອາຊຽນ; ການກຳນົດນະໂຍບາຍ, ຍຸດທະສາດ, ແຜນງານ, ໂຄງການ, ກິດຈະກຳກ່ຽວກັບນະວັດຕະກຳການຮັກສາສຸຂະພາບແບບອັດສະລິຍະ; ສະພາບການປະຕິບັດແຜນງານກ່ຽວກັບສົນທິສັນຍາປລາສະຕິກໂລກຂອງ ສປປລາວ; ສະພາບການຈັດຕັ້ງປະຕິບັດການສົ່ງເສີມສິດ, ສະຫວັດດີການສັງຄົມແລະໂອກາດໃນການຈ້າງງານສຳລັບຜູ້ອາຍຸສູງໃນສປປລາວແລະບົດຮຽນທີ່ດີຂອງປະເທດສະມາຊິກອາຊຽນ. ຈາກນັ້ນ, ກໍໄດ້ຖອດຖອນບົດຮຽນ, ແລກປ່ຽນຄວາມຄິດຄວາມເຫັນເຊິ່ງກັນແລະກັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ແລະ ຊັກຖາມໃນບັນຫາຕ່າງໆນຳວິທະຍາກອນ ແລະ ຜູ້ຊ່ຽວຊານທີ່ໄດ້ນຳມາສະເໜີ ໃຫ້ມີຄວາມເຂົ້າໃຈຢ່າງກວ້າງຂວາງ, ເລິກເຊິ່ງ ແລະ ໜັກແໜ້ນ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPs) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ ສົມທົບກັບງົບປະມານຂອງຄະນະເລຂາທິການສະພາແຫ່ງຊາດ.

**(ກົງທະນູຄຳ ພິພັດເສລີ)**

# ມອບຄວາມຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມ




(ສພຂ) - ວັນທີ 4 ຕຸລາ ຜ່ານມາ, ໃນໂອກາດມາເຄື່ອນໄຫວວຽກງານທີ່ແຂວງໄຊຍະບູລີ, ທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ມອບອຸປະກອນການຮຽນ, ເຄື່ອງອຸປະໂພກ-ບໍລິໂພກ ແລະ ເງິນສົດ 35 ລ້ານກີບ ໃນນີ້ມີເງິນຈາກຄອບຄົວທ່ານ ພົທ. ສຸວອນເລືອງບຸນມີ 5 ລ້ານກີບ ລວມມູນຄ່າ 50 ລ້ານກວ່າກີບ ໃຫ້ແກ່ເມືອງຄອບເພື່ອນຳໄປຊ່ວຍເຫຼືອພໍ່ແມ່ປະຊາຊົນຜູ້ປະສົບໄພພິບັດນ້ຳຖ້ວມ ໂດຍການກ່າວຮັບຂອງທ່ານ ໄລ ອິນທິບ ຮອງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງຄອບ ພ້ອມທັງສະແດງຄວາມຂອບໃຈທີ່ນຳເອົາຄວາມເປັນຫ່ວງເປັນໄຍ ມາສູ່ພໍ່ແມ່ປະຊາຊົນ ພ້ອມທັງຈະນຳເອົາເຄື່ອງ ແລະ ເງິນສົດດັ່ງກ່າວ ໄປມອບຕໍ່ໂດຍໄວ.

**(ອິນທີ ຊຽວສີຟ້າ)**

# ຮອງປະທານສະພາແຫ່ງຊາດກຳປູເຈຍ ເຂົ້າຢ້ຽມຂ່ຳນັບປະທານສະພາແຫ່ງຊາດ



(ສພຊ) - ຕອນບ່າຍວັນທີ9ຕຸລາຜ່ານມາ, ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດພ້ອມດ້ວຍຄະນະ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງທ່ານກິດຕິເສດຖາບັນດິດ ຈຽມ ຢຽບ ຮອງປະທານສະພາແຫ່ງຊາດ ຜູ້ທີໜຶ່ງ ແຫ່ງ ລາຊະອານາຈັກກຳປູເຈຍ ພ້ອມດ້ວຍຄະນະ ໃນໂອກາດມາເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ໄອປາ (ASEAN-AIPA Leaders' Interface) ທີ່ ສປປ ລາວ ເປັນເຈົ້າ ພາບ; ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການເດີນທາງມາເຂົ້າຮ່ວມກອງປະຊຸມພົບປະດັ່ງກ່າວ ເຊິ່ງເປັນການປະກອບສ່ວນສືບຕໍ່ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ມີມູນເຊື້ອ, ການພົວພັນແບບຄູ່ຮ່ວມຍຸດທະສາດຮອບດ້ານ ແລະ ໝັ້ນຄົງຍາວນານ ລະຫວ່າງ ລາວ-ກຳປູເຈຍ ທັງເປັນການຈັດຕັ້ງຜັນຂະຫຍາຍບົດບັນທຶກຊ່ວຍຈຳວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ໃຫ້ເປັນຮູບປະທຳ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ.

ໃນການຕ້ອນຮັບ, ທັງສອງຝ່າຍໄດ້ສະເໜີທິດທາງການຮ່ວມມືໃນຕໍ່ໜ້າຄື: ສືບຕໍ່ຈັດຕັ້ງປະຕິບັດບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືທີ່ສອງສະພາແຫ່ງຊາດໄດ້ລົງນາມຮ່ວມກັນ ໃຫ້ເປັນຮູບປະທຳກວ່າເກົ່າ; ແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນສູງ ແລະ ຂັ້ນຕ່າງໆແຕ່ສູນກາງຮອດທ້ອງຖິ່ນນຳກັນ ໂດຍສະເພາະແມ່ນການແລກປ່ຽນລະຫວ່າງສະພາປະຊາຊົນຂັ້ນແຂວງທີ່ມີຊາຍແດນຕິດຈອດກັນ ເພື່ອແລກປ່ຽນບົດຮຽນການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດນຳກັນ; ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການຂອງສອງລັດຖະບານ ເອົາໃຈໃສ່ຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ນິຕິກຳອື່ນໆ ທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ໃຫ້ມີປະສິດທິຜົນສູງກວ່າເກົ່າ ແລະ ນຳເອົາປະໂຫຍດອັນແທ້ຈິງ ມາສູ່ປະຊາຊົນສອງຊາດ; ສະໜັບສະໜູນ ແລະ ຮ່ວມມືກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ສຸມິນທາ ງາໄຊ)**

# ປະທານສະພາແຫ່ງຊາດ ຕ້ອນຮັບ ທູດຫວຽດນາມ ປະຈຳ ສປປລາວ ຄົນໃໝ່



(ສພຊ) - ວັນທີ 4 ຕຸລາຜ່ານມາ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບສະຫາຍ ຫງວຽນ ມິງ ເຕີມ (Nguyễn Minh Tâm) ໃນໂອກາດທີ່ໄດ້ຮັບການແຕ່ງຕັ້ງເປັນເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ. ຫວຽດນາມ ປະຈຳ ສປປລາວ ຄົນໃໝ່ ເຊິ່ງສະ ຫາຍ ປອ. ໄຊສົມພອນພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນ ພ້ອມທັງຕີລາຄາສູງຕໍ່ສະຫາຍ ຫງວຽນ ມິງ ເຕີມ ທີ່ໄດ້ຮັບຄວາມເຊື່ອໝັ້ນ, ຄວາມໄວ້ເນື້ອເຊື່ອໃຈຈາກພັກ, ລັດ ກໍຄືປະຊາຊົນຫວຽດນາມອ້າຍນ້ອງ ໃຫ້ມາປະຕິບັດໜ້າທີ່ເປັນທູດຢູ່ ສປປລາວ ເຊິ່ງເປັນຜູ້ສືບທອດພາລະກິດໜ້າທີ່ການທູດ, ກົນໄກປະສານງານ ໃຫ້ແກ່ການພົວພັນຮ່ວມມືຂອງສອງປະເທດ ກໍຄືຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ທີ່ປະທານໂຮ່ ຈີ ມິງ, ປະທານໄກສອນ ພົມວິຫານ ແລະ ປະທານສຸພານຸວົງ ເປັນຜູ້ກໍ່ຕັ້ງ ແລະ ໄດ້ຮັບການສືບທອດໂດຍການນຳປະຕິວັດຮຸ່ນຕໍ່ໆມາເຖິງປັດຈຸບັນ ໃຫ້ນັບມື້ເຂົ້າສູ່ລວງເລິກຍິ່ງໆຂຶ້ນ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ສະແດງຄວາມປິຕິຍິນດີທີ່ຈະໄດ້ຕ້ອນຮັບສະຫາຍ ເຈິ່ນແທັງເໝິນ ກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມ, ປະທານສະພາແຫ່ງຊາດ ນຳພາຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຫວຽດນາມ ຢ້ຽມຢາມ ສປປລາວ ຢ່າງເປັນທາງການໃນລະຫວ່າງວັນທີ 17-18 ຕຸລານີ້ ແລະ ສືບຕໍ່ເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45; ພ້ອມດຽວກັນ, ກໍຍິນດີຕ້ອນຮັບສະຫາຍ ພົທ. ເຈິ່ນ ກວາງ ເຟືອງ ກຳມະການສູນກາງພັກກອມມູນິດຫວຽດນາມ, ຮອງປະທານສະພາແຫ່ງຊາດພ້ອມດ້ວຍຄະນະເຂົ້າຮ່ວມກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ໄອປາ ໃນລະຫວ່າງວັນທີ 8-10 ຕຸລາ 2024 ເຊິ່ງເປັນການໃຫ້ກຳລັງໃຈ ແລະ ສະໜັບສະໜູນສະພາແຫ່ງຊາດລາວ ເປັນເຈົ້າພາບກອງປະຊຸມ ແລະ ເຮັດສຳເລັດພັນທະສາກົນດັ່ງກ່າວ.

ສະຫາຍ ຫງວຽນ ມິງ ເຕີມ ໄດ້ສະແດງຄວາມຂອບໃຈຕໍ່ປະທານສະພາແຫ່ງຊາດ ທີ່ໃຫ້ການຕ້ອນຮັບຢ່າງອົບອຸ່ນ, ຄຳຊົມເຊີຍ ແລະ ຄຳເວົ້າອັນຈິງໃຈ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ສະພາບການທີ່ພົ້ນເດັ່ນຂອງປະເທດຫວຽດນາມ; ຢືນຢັນວ່າ ຈະສືບຕໍ່ຊຸກຍູ້ສົ່ງເສີມສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ.

**(ອານຸສອນ ພູມມີທອນ)**

# ຮອງປະທານ ສພຊ ເຄື່ອນໄຫວ ວຽກງານຢູ່ອຸດົມໄຊ ແລະ ຫຼວງພະບາງ




(ສພຊ) - ເພື່ອຕິດຕາມກວດກາຄວາມຄືບໜ້າຂອງການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ VII ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດເຮັດທົດລອງວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016; ເພື່ອຊອກໃຫ້ເຫັນຜົນງານ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບົດຮຽນທີ່ຖອດຖອນໄດ້ຜ່ານການຈັດຕັ້ງປະຕິບັດຕົວຈິງຂອງສູນກາງ ແລະ ທ້ອງຖິ່ນ ໃນໄລຍະຜ່ານມາ ທັງເປັນການເກັບກຳຂໍ້ມູນການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງກັບແຂວງ, ແຂວງກັບເມືອງ ແລະ ເມືອງກັບບ້ານ ເພື່ອກຽມລາຍງານຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກ່ອນເປີດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາການສືບຕໍ່ການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນຕໍ່ໜ້າ.

ວັນທີ 30 ກັນຍາ - 4 ຕຸລາຜ່ານມາ, ທ່ານຄຳໃບດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຢູ່ແຂວງອຸດົມໄຊ ແລະແຂວງຫຼວງພະບາງ ໃນນັ້ນ, ແຂວງອຸດົມໄຊ ເຄື່ອນໄຫວຢູ່ເມືອງໄຊ, ບ້ານຈຸດສຸມໜອງແມງດາ, ບ້ານຈຸດສຸມຫຼັກ32; ແຂວງຫຼວງພະບາງ ເຄື່ອນໄຫວຢູ່ 4 ຈຸດຄື: ເມືອງນ້ຳບາກ, ບ້ານຈຸດສຸມນ້ຳຖ້ວມໃຕ້, ບ້ານຈຸດສຸມເມືອງຂາຍ ແລະ ນະຄອນຫຼວງພະບາງ ໂດຍການຕ້ອນຮັບ ແລະ ຮ່ວມເຮັດວຽກກັບການນຳຂອງແຂວງ, ເມືອງ-ນະຄອນ ແລະ ບ້ານພ້ອມດ້ວຍພໍ່ແມ່ປະຊາຊົນເຂົ້າຮ່ວມ.

ທ່ານ ຄຳໃບ ດຳລັດ ໄດ້ມີຄຳເຫັນເນັ້ນໜັກໃຫ້ຄະນະນຳຂອງແຂວງ, ເມືອງ-ນະຄອນ ສືບຕໍ່ກະກຽມກອງປະຊຸມໃຫຍ່ 3 ຂັ້ນ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ, ໃນນັ້ນ ສະເໜີໃຫ້ເອົາວຽກງານຂົງເຂດສຶກສາເຂົ້າຕື່ມ ເປັນຕົ້ນແມ່ນຊຸກຍູ້, ປຸກລະດົມການເຂົ້າຮຽນຂອງນັກຮຽນໃນທຸກຊັ້ນ-ທຸກສາຍໃຫ້ເພີ່ມຂຶ້ນ ແກ້ໄຂບັນຫາການປະລະການຮຽນ, ການຂາດແຄນຄູສອນ, ການສົ່ງເສີມການຮຽນໃນຊັ້ນສາມັນສຶກສາວິຊາຊີບ; ຈັດຕັ້ງປະຕິບັດວາລະແຫ່ງຊາດຮອດປີ 2025 ໃນຂົງເຂດຄວາມຮັບຜິດຊອບຂອງຕົນ ໂດຍສະເພາະບັນຫາຢາເສບຕິດ, ບັນຫາເສດຖະກິດ (ໄພເງິນເຟີ້-ຄ່າຄອງຊີບສູງ...); ຈັດຕັ້ງປະຕິບັດມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຂອງອົງຄະນະພັກແຂວງ ໂດຍສຸມໃສ່ແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຄຸ້ມຄອງດ້ານລາຍຮັບ-ລາຍຈ່າຍ, ຊຸກຍູ້ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ.

**(ນາງ ກຸກກິກ ບຸດດາໄຊ)**



# ກວດກາເນື້ອໃນຮອບດ້ານຮ່າງກົດໝາຍການສຶກສາ



(ສພຊ) - ກອງປະຊຸມກວດກາເນື້ອໃນຮອບດ້ານຮ່າງກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ໄດ້ຈັດຂຶ້ນເມື່ອວັນທີ 9-10 ຕຸລາຜ່ານມາ ທີ່ເມືອງແກ້ວອຸດົມແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ (ສພຊ); ມີທ່ານ ຮສ. ປອ. ພຸດ ສິມມາລາວົງ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ບັນດາທ່ານປະທານ-ຮອງປະທານກຳມາທິການ ສພຊ, ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ຄະນະທີ່ປຶກສາທາງດ້ານກົດໝາຍຂອງຄະນະປະຈຳສະພາແຫ່ງຊາດແລະພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ຄຳໃບ ດຳລັດ ມີຄຳເຫັນວ່າ: ກອງປະຊຸມຄັ້ງນີ້ແມ່ນມີຄວາມໝາຍສຳຄັນຫຼາຍ ເພາະເປັນກອງປະຊຸມຄົ້ນຄວ້າເນື້ອໃນຂອງຮ່າງກົດໝາຍຢ່າງລະອຽດ, ຮອບດ້ານ ຕິດພັນກັບການຈັດຕັ້ງປະຕິບັດຕົວຈິງ ແນໃສ່ເຮັດໃຫ້ເນື້ອໃນຂອງຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ; ຈາກນັ້ນ, ກຳມາທິການກົດໝາຍຈະໄດ້ລາຍງານຜົນສຳເລັດຂອງການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍ ຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດເພື່ອຕົກລົງເອົາໄປທາບທາມຄຳເຫັນກັບບັນດາທ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ກ່ອນນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ທີ່ຈະໄດ້ໄຂຂຶ້ນໃນໄວໆນີ້.

ທ່ານ ສຳລານ ພັນຄະວົງ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ສະເໜີໂດຍຫຍໍ້ກ່ຽວກັບເຫດຜົນແລະຄວາມຈຳເປັນຂອງການປັບປຸງກົດໝາຍວ່າດ້ວຍການສຶກສາ, ຕາງໜ້າກົມກົດໝາຍຂອງສະພາແຫ່ງຊາດໄດ້ສະເໜີເນື້ອໃນຂອງຮ່າງກົດໝາຍດັ່ງກ່າວ; ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ຍົກສູງຄວາມຮັບຜິດຊອບແລະເປັນເຈົ້າການຄົ້ນຄວ້າ, ປະກອບຄຳເຫັນຕໍ່ເນື້ອໃນຂອງຮ່າງກົດໝາຍ ທີ່ຕິດພັນກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງຂະແໜງການຕົນ ແນໃສ່ເຮັດໃຫ້ເນື້ອໃນມີຄວາມກະຈ່າງແຈ້ງ, ຮັດກຸມ ແລະ ແທດເໝາະກັບສະພາບຄວາມເປັນຈິງໃນປັດຈຸບັນ. ປັດຈຸບັນ, ກົດໝາຍສະບັບດັ່ງກ່າວ ໄດ້ຮັບການກວດກາເນື້ອໃນຮອບດ້ານຂັ້ນວິຊາການ ຮ່ວມກັບສະພາແຫ່ງຊາດ ແລະ ສະເໜີ (ຮ່າງ) ກົດໝາຍວ່າດ້ວຍການສຶກສາ ຫາ ສພຊ ເພື່ອກະກຽມເຂົ້າຜ່ານກອງປະຊຸມສະໄໝສາມັນເທື່ອທີ 8 ໃນທ້າຍປີນີ້.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານຈາກມູນນິທິເອເຊຍ (The Asia Foundation) ໂດຍຜ່ານກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າໃຫ້ແກ່ສະພາແຫ່ງຊາດ.

**(ນາງ ອານິຕາ ມ່ວນສະຫວັດ)**

# ກອງປະຊຸມໄອປາ 45 ຈະຈັດວັນທີ 17-23 ຕຸລານີ້

(ສພຊ) - ຕອນບ່າຍວັນທີ 14 ຕຸລາຜ່ານມາ ທີ່ຫ້ອງຖະແຫຼງຂ່າວສະພາແຫ່ງຊາດ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດໄອປາ-45 ໄດ້ຕາງໜ້າໃຫ້ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການກະກຽມດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ວ່າ: ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ຈະໄດ້ຈັດຂຶ້ນໃນລະຫວ່າງວັນທີ 17-23 ຕຸລາ 2024 ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ ພາຍໃຕ້ຫົວຂໍ້: "ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະການເຕີບໂຕແບບກວມລວມຂອງອາຊຽນ"; ຄະນະຜູ້ແທນທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ ນຳໂດຍບັນດາປະທານຈາກລັດຖະສະພາສະມາຊິກໄອປາ, ຄະນະຜູ້ແທນລັດຖະສະພາສັງເກດການ, ແຂກປະເທດເຈົ້າພາບ, ຄູ່ຮ່ວມພັດທະນາຂອງໄອປາ, ເລຂາທິການໃຫຍ່ອາຊຽນ, ເລຂາທິການໃຫຍ່ໄອປາແລະຄະນະຜູ້ແທນ ສປປລາວ ເຈົ້າພາບ ລວມມີປະມານ 500 ທ່ານ.



ທ່ານສັນຍາປຣະເສີດ ໃຫ້ຮູ້ວ່າ: ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ່45ນີ້ຈະມີກອງປະຊຸມຕ່າງໆທັງໝົດ 12 ກອງປະຊຸມ ຄື: 1. ກອງປະຊຸມຄະນະບໍລິຫານງານໄອປາ, 2. ກອງປະຊຸມກຳມາທິການການເມືອງ, 3. ກອງປະຊຸມກຳມາທິການເສດຖະກິດ, 4. ກອງປະຊຸມກຳມາທິການວຽກງານສັງຄົມ, 5. ກອງປະຊຸມກຳມາທິການວຽກງານຈັດຕັ້ງພາຍໃນ, 6. ກອງປະຊຸມກຳມາທິການສະມາຊິກສະພາເພດຍິງ, 7. ກອງປະຊຸມສະມາຊິກລັດຖະສະພາໜຸ່ມໄອປາ, 8. ກອງປະຊຸມກຳມາທິການຖະແຫຼງການຮ່ວມ, 9. ກອງປະຊຸມພົບປະລະຫວ່າງກອງເລຂາໄອປາ ແລະ ກອງເລຂາອາຊຽນ, 10. ກອງປະຊຸມພົບປະກັບລັດຖະສະພາສັງເກດການ, 11. ກອງປະຊຸມເວທີຜູ້ນຳການເມືອງເພດຍິງ WAIPA, 12. ກອງປະຊຸມກອງເລຂາແຫ່ງຊາດຂອງບັນດາລັດຖະສະພາປະເທດສະມາຊິກໄອປາ ແລະ ກອງປະຊຸມເລຂາທິການຂອງຄະນະຜູ້ແທນຂອງບັນດາລັດຖະສະພາສັງເກດການໄອປາ.

ກອງປະຊຸມຕ່າງໆທີ່ກ່າວມານັ້ນ, ຈະໄດ້ລົງເລິກຄົ້ນຄວ້າ, ພິຈາລະນາ ແລະຮັບຮອງເອົາຮ່າງມະຕິທັງໝົດ 38 ສະບັບ, ໃນນີ້ ຂົງເຂດການເມືອງ 4 ສະບັບ, ຂົງເຂດເສດຖະກິດ 8 ສະບັບ, ຂົງເຂດສັງຄົມ 5 ສະບັບ, ວຽກງານເພດຍິງ 2 ສະບັບ, ວຽກງານຊາວໜຸ່ມ 3 ສະບັບແລະວຽກງານຈັດຕັ້ງພາຍໃນ 16 ສະບັບ.

ກອງປະຊຸມສະມັດຊາໃຫຍ່ໄອປາຄັ້ງທີ່ 45 ນີ້ ຈະໄດ້ປຶກສາຫາລືກ່ຽວກັບບັນຫາທີ່ເປັນຜົນປະໂຫຍດຮ່ວມກັນຂອງພາກພື້ນກໍຄືຂອງໂລກ ເພື່ອເພີ່ມທະວີການເຊື່ອມໂຍງພາຍໃນອາຊຽນແລະລະຫວ່າງອາຊຽນກັບພາກພື້ນອື່ນ ເພື່ອເຮັດໃຫ້ເສດຖະກິດອາຊຽນມີຄວາມເຂັ້ມແຂງ, ຮັດແຄບຄວາມແຕກໂຕນຂອງລະດັບການພັດທະນາ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນແລະພ້ອມກັນກ້າວໄປຂ້າງໜ້າໂດຍບໍ່ປະຖິ້ມໃຜໄວ້ຂ້າງຫຼັງ.

ປັດຈຸບັນ,ການກະກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ໄດ້ມີຄວາມຄືບໜ້າໃນທຸກດ້ານ, ດຳເນີນໄປຕາມບາດກ້າວແລະຄາດວ່າຈະສາມາດດຳເນີນກອງປະຊຸມໄດ້ຕາມກຳນົດເວລາ.

ໃນນາມຕາງໜ້າໃຫ້ຄະນະກຳມະການຊີ້ນຳລະດັບຊາດ, ທ່ານ ສັນຍາ ປຣະເສີດ ໄດ້ເຊີນຊວນບັນດາທ່ານພະນັກງານ, ລັດຖະກອນ, ທະຫານ,ຕຳຫຼວດ,ນັກຮຽນ,ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນບັນດາເຜົ່າທຸກຊັ້ນຄົນໃນທົ່ວປະເທດ, ຊາວນະຄອນຫຼວງວຽງຈັນ, ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ, ບັນດາທູຕານຸທູດ ແລະ ຜູ້ຕາງໜ້າອົງການຈັດຕັ້ງສາກົນ ປະຈຳ ສປປລາວ ຈົ່ງຮ່ວມຈິດຮ່ວມໃຈກັນຕ້ອນຮັບຄະນະຜູ້ແທນ, ແຂກຕ່າງປະເທດ ທີ່ເດີນທາງມາເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ດ້ວຍໄມຕີຈິດ, ມິດຕະພາບ, ດ້ວຍຮອຍຍິ້ມອັນແຈ່ມໃສ ເພື່ອສ້າງຄວາມຊົງຈຳ ແລະ ຄວາມປະທັບໃຈໃຫ້ແກ່ຜູ້ແທນທີ່ມາເຂົ້າຮ່ວມກອງປະຊຸມ ພ້ອມທັງຮັບປະກັນໃຫ້ກອງປະຊຸມຄັ້ງນີ້ ມີຄວາມເປັນລະບຽບຮຽບຮ້ອຍ, ຄວາມສະຫງົບປອດໄພ ແລະ ມີຜົນສຳເລັດຈົບງາມ.

**(ກົງທະນູຄຳ ພິພັດເສລີ)**

# ຮອງປະທານສະພາແຫ່ງຊາດ ຕິດຕາມກວດກາ ວຽກ 3 ສ້າງ ຢູ່ບໍລິຄຳໄຊ ແລະ ສະຫວັນນະເຂດ



(ສພຊ)-ເມື່ອວັນທີ29 ກັນຍາ ຫາ 2 ຕຸລາ 2024 ທ່ານ ສົມມາດ ພົລເສນາ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະເຊິ່ງປະກອບມີທ່ານຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ທ່ານຮອງປະທານກຳມາທິການບັນດາເຜົ່າ;ຕາງໜ້າຫ້ອງວ່າການສູນກາງພັກ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງພາຍໃນ ຮ່ວມກັບຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດໄດ້ເຄື່ອນໄຫວພົບປະຢ້ຽມຢາມພໍ່ ແມ່ປະຊາຊົນ, ຊຸກຍູ້ວຽກງານສາມສ້າງຢູ່ 6 ຈຸດຄື: ວັນທີ 29 ກັນຍາ, ພົບປະການນຳເມືອງປາກຊັນ ແລະ ພໍ່ແມ່ປະຊາຊົນ ບ້ານບົວແວງຄຳ ເມືອງປາກຊັນ ແຂວງບໍລິຄຳໄຊ; ວັນທີ 30 ກັນຍາ, ຕິດຕາມກວດກາ ແລະ ເກັບກຳຂໍ້ມູນຢູ່ກຸ່ມບ້ານມັນຈິເມືອງເຊໂປນ ແລະ ກຸ່ມບ້ານພັດທະນາອາສິງ ເມືອງນອງ ແຂວງສະຫວັນນະເຂດ; ວັນທີ 1 ຕຸລາ, ພົບປະບັນດາພະແນກການຂອງແຂວງທີ່ຫ້ອງການສະພາປະຊາຊົນແຂວງ (ສພຂ) ສະຫວັນນະເຂດ ແລະ ພົບປະການນຳເມືອງປາກກະດິງ ແລະ ພໍ່ແມ່ປະຊາຊົນບ້ານວຽງຄຳ ເມືອງປາກກະດິງ ແຂວງບໍລິຄຳໄຊ; ວັນທີ 2 ຕຸລາ, ພົບປະບັນດາພະແນກການຂອງແຂວງ ທີ່ຫ້ອງການ ສພຂ ບໍລິຄຳໄຊ.

ທີ່ບ້ານບົວແວງຄຳ, ທ່ານນາງ ຄຳເພັດ ດວງມະນີ ສະມາຊິກສະພາປະຊາຊົນແຂວງ(ສສຂ) ບໍລິຄຳໄຊ ປະຈຳເຂດເລືອກຕັ້ງເມືອງປາກຊັນ ໄດ້ຕາງໜ້າການນຳເມືອງ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຊິ່ງມີບາງຕອນວ່າ: ອຳນາດການປົກຄອງເມືອງປາກຊັນ ໄດ້ເອົາໃຈໃສ່ຄຸ້ມຄອງໂຄງການລົງທຶນຂອງລັດທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນການປະຕິບັດໂຄງການມູນຄ່າ 5 ຕື້ລົງມາ; ຫ້ອງການການເງິນເມືອງໄດ້ເປັນເຈົ້າການສົມທົບກັບພະແນກ ການເງິນແຂວງ ຄົ້ນຄວ້າສັງລວມສ້າງແຜນລາຍຮັບ-ລາຍຈ່າຍຂອງເມືອງ ໂດຍອີງໃສ່ທ່າແຮງບົ່ມຊ້ອນທີ່ມີຢູ່ພາຍໃນ ເມືອງເປັນຫົວໜ່ວຍການຈັດເກັບລາຍຮັບເຂົ້າງົບປະມານຕາມແຜນລາຍຮັບປີ 2024; ເມືອງໄດ້ລົງທຶນປັບປຸງກໍ່ສ້າງຍົກລະດັບພື້ນຖານໂຄງລ່າງດ້ານເສດຖະກິດ ເພື່ອຮັບໃຊ້ການຜະລິດ ແລະການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ມີເສັ້ນທາງທຽວໄດ້ຕະຫຼອດປີ ໃນ 54 ບ້ານ ເທົ່າກັບ 100%; ເມືອງໄດ້ມີແຜນສ້າງຄວາມເຂັ້ມແຂງດ້ານເສດຖະກິດ-ການເງິນ ໂດຍອີງໃສ່ທ່າແຮງບົ່ມຊ້ອນຂອງເມືອງ ແລະ ສົມທົບກັບບັນດາຫ້ອງການທີ່ກ່ຽວຂ້ອງຂັ້ນເມືອງ ໃນການສົ່ງເສີມການຜະລິດສິນຄ້າຕາມຄວາມຕ້ອງການຂອງຕະຫຼາດ.

ຕາງໜ້າຄະນະອົງການປົກຄອງບ້ານບົວແວງຄຳ ກໍໄດ້ລາຍງານສະພາບການພົ້ນເດັ່ນບາງດ້ານ ແລະ ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ເຊິ່ງໄລຍະຜ່ານມາ, ພື້ນຖານໂຄງລ່າງຂອງບ້ານໄດ້ຮັບການພັດທະນາເປັນຕົ້ນແມ່ນເສັ້ນທາງເຮັດໃຫ້ການສັນຈອນໄປມາມີຄວາມສະດວກສະບາຍ, ຄວາມທຸກຍາກຂອງປະຊາຊົນໄດ້ຮັບການແກ້ໄຂຢ່າງຈິງຈັງ ແລະ ກວ້າງຂວາງ. ປະຊາຊົນມີຄວາມຕື່ນຕົວຢ່າງຕັ້ງໜ້າໃນການພັດທະນາເສດຖະກິດຄອບຄົວ, ສ່ວນໃຫຍ່ມີອາຊີບປູກຝັງ ໂດຍສະເພາະແມ່ນປູກເຂົ້ານາປີ; ນອກນັ້ນ ຍັງເຮັດສວນມັນຕົ້ນ, ສວນຢາງພາລາ ໄປຄຽງຄູ່ກັບການລ້ຽງສັດເປັນສຳຮອງ ແລະຍັງມີການບໍລິການ

ອ່ານຕໍ່ໜ້າ 8

# ມອບຜະລິດຕະພັນ ສະໜັບສະໜູນກອງປະຊຸມໄອປາ




(ສພຊ) - ວັນທີ 11 ຕຸລານີ້ ໄດ້ມີພິທີມອບ-ຮັບຜະລິດຕະພັນທີ່ເປັນເອກະລັກໂອດ້ອບ ຊ້າງໄມ້ 2 ໂຕ ໃຫ້ແກ່ຫ້ອງມູນເຊື້ອສະພາແຫ່ງຊາດ ແລະ ຜະລິດຕະພັນຊ້າງຈາກຜ້າຝ້າຍ 400 ໂຕເພື່ອສະໜັບສະໜູນກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ລວມມູນຄ່າ 96.9 ລ້ານກີບ ເຊິ່ງຕາງໜ້າໃຫ້ແກ່ອົງການປົກຄອງແຂວງໄຊຍະບູລີ ກ່າວມອບໂດຍທ່ານ ນາງ ວັນນາພິມວິສອນ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7, ເລຂາທິການສະພາປະຊາຊົນແຂວງ (ສພຂ) ແລະ ກ່າວຮັບໂດຍທ່ານ ນາງ ອຳໄພວອນ ລ້ອມບຸນແພງ ເລຂາທິການສະພາແຫ່ງຊາດ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຕອນເຊົ້າວັນພະຫັດທີ 10 ຕຸລາຜ່ານມາ ກໍໄດ້ມີການມອບ-ຮັບສິນຄ້າໂອດ້ອບ (ກາເຟເມັດຂົ້ວ) ຈາກສະພາປະຊາຊົນແຂວງໄຊສົມບູນ ຈຳນວນ 100 ຖົງ ລວມມູນຄ່າ 25 ລ້ານກີບເພື່ອສະໜັບສະໜູນກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ເຊິ່ງຕາງໜ້າກ່າວຮັບໂດຍທ່ານນາງ ອຳໄພວອນລ້ອມບຸນແພງ, ຕາງໜ້າກ່າວມອບໂດຍທ່ານ ນາງ ຂັນກາບ ໄຊຍະກຸມມານ ສສຊ ປະຈຳເຂດເລືອກຕັ້ງທີ 18, ເລຂາທິການ ສພຂ ໂດຍມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ຕອນບ່າຍວັນພຸດທີ 9 ຕຸລາຜ່ານມາ ກໍໄດ້ມີພິທີມອບ-ຮັບເຄື່ອງຫັດຖະກຳ ມູນຄ່າ 12 ລ້ານກີບ ເພື່ອຮັບໃຊ້ກອງປະຊຸມ AIPA 45 ເຊິ່ງກ່າວມອບໂດຍທ່ານ ວິລັດ ສຸມີໄຊ ຮອງເລຂາທິການສະພາປະຊາຊົນແຂວງບໍລິຄຳໄຊ, ກ່າວຮັບໂດຍທ່ານ ອາຄົມ ປຣະເສີດ ຮອງເລຂາທິການສະພາແຫ່ງຊາດ ພ້ອມດ້ວຍພະນັກງານທັງສອງຝ່າຍເຂົ້າຮ່ວມ; ທ່ານ ອາຄົມ ປຣະເສີດ ໄດ້ກ່າວຄຳຂອບໃຈຕໍ່ ສພຂ ບໍລິຄຳໄຊ ທີ່ໄດ້ປະກອບສ່ວນສຳຄັນ ແລະ ສະໜັບສະໜູນຜະລິດຕະພັນທີ່ມີຄວາມເປັນເອກະລັກສະເພາະ ແລະ ຜະລິດຢູ່ພາຍໃນແຂວງບໍລິຄຳໄຊທີ່ສາມາດຈັດເປັນເຄື່ອງຕ້ອນຂອງ ຝາກໃຫ້ແກ່ຜູ້ແທນຕ່າງປະເທດທີ່ເຂົ້າຮ່ວມກອງປະຊຸມໄອປາຄັ້ງນີ້.



# ກຳມາທິການການຕ່າງປະເທດ ຕ້ອນຮັບ ຄະນະຊ່ຽວຊານຈາກຫວຽດນາມ



(ສພຊ) - ວັນທີ 1-3 ຕຸລາ 2024 ທ່ານ ຈັນທະວົງແສນ ອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ແລະ ກອງເລຂາປະຈຳການໄອປາ ໄດ້ຕ້ອນຮັບ ແລະ ພົບປະເຮັດວຽກກັບຄະນະຊ່ຽວຊານຈາກສະພາແຫ່ງຊາດ ສສ.ຫວຽດນາມ ນຳໂດຍທ່ານ ໂດ່ນ ຕວັນ ຟ່ອງ (Đôn Tuấn Phong) ຮອງປະທານກຳມາທິການການຕ່າງປະເທດ ເພື່ອປຶກສາຫາລື ແລະ ແລກປ່ຽນບົດຮຽນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA); ໃນໂອກາດດຽວກັນນີ້, ຄະນະຜູ້ແທນດັ່ງກ່າວ ຍັງໄດ້ເຮັດວຽກຮ່ວມກັບບັນດາຄະນະຮັບຜິດຊອບເນື້ອໃນກອງປະຊຸມໄອປາ-45 ເພື່ອປຶກສາຫາລື, ແລກປ່ຽນຄຳຄິດຄຳເຫັນ ແລະ ຖອດຖອນບົດຮຽນກ່ຽວກັບການກະກຽມເປັນເຈົ້າພາບກອງປະຊຸມໄອປາ ຄັ້ງທີ 45 ລວມທັງໝົດ 6 ກອງປະຊຸມຄື: ກອງປະຊຸມວຽກງານການເມືອງ, ກອງປະຊຸມວຽກງານເສດຖະກິດ, ກອງປະຊຸມວຽກງານສັງຄົມ, ກອງປະຊຸມວຽກງານສະມາຊິກລັດຖະສະພາເພດຍິງໄອປາ (WAIPA), ກອງປະຊຸມວຽກງານສະມາຊິກລັດຖະສະພາໜຸ່ມໄອປາ (YPA) ແລະ ກອງປະຊຸມຖະແຫຼງການຮ່ວມ.

**(ນາງ ໄຊໂສພາພອນ ມິ່ງມຸງຄຸນ)**

# ກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳ ແລະ ສສຊ ໃນການເປັນເຈົ້າພາບ AIPA

(ສພຊ) - ກອງປະຊຸມສຳມະນາກ່ຽວກັບການເປັນປະທານກອງປະຊຸມກຳມາທິການຕ່າງໆຂອງກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ໃຫ້ແກ່ການນຳ ແລະ ສະມາຊິກສະພາແຫ່ງຊາດ (ສສຊ) ໄດ້ຈັດຂຶ້ນໃນວັນທີ 4 ຕຸລາຜ່ານມາ ໂດຍການເປັນປະທານຂອງທ່ານ ສົນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ຫົວໜ້າອະນຸກຳມະການກອງເລຂາໄອປາແຫ່ງຊາດ; ເຂົ້າຮ່ວມມີບັນດາທ່ານປະທານກອງປະຊຸມປິ່ນອ້ອມໄອປາ, ສສຊ ທີ່ສັງກັດໃນແຕ່ລະອະນຸກຳມະການ, ກອງເລຂາໄອປາພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຈຳນວນໜຶ່ງ. ຈຸດປະສົງກໍເພື່ອກະກຽມຄວາມພ້ອມຮອບດ້ານໃນການກະກຽມເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາຄັ້ງທີ 45 ໂດຍສະເພາະແມ່ນການເປັນປະທານກອງປະຊຸມ, ການຄວບຄຸມ ແລະ ບັນຊາກອງປະຊຸມ, ການປະກອບຄຳເຫັນຕໍ່ກອງປະຊຸມ, ທັກສະໃນການເຈລະຈາ ແລະ ກົນໄກການພິຈາລະນາຕົກລົງບັນຫາຂອງໄອປາທັງເປັນການສະໜອງຂໍ້ມູນກ່ຽວກັບອົງການ, ບົດບາດ ແລະ ກົນໄກການດຳເນີນງານຂອງໄອປາ.



ທ່ານ ສົນຍາ ປຣະເສີດ ມີຄຳເຫັນວ່າ: ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ແລະ ກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ກັບ ຜູ້ນຳໄອປາ, ໃນນາມທີ່ ສປປລາວ ເປັນເຈົ້າພາບ ຕ້ອງຮ່ວມແຮງຮ່ວມໃຈກັນກະກຽມຄວາມພ້ອມຮອບດ້ານ ເປັນຕົ້ນແມ່ນການເປັນປະທານກອງປະຊຸມ, ການເຈລະຈາການຕົກລົງຕັດສິນບັນຫາໃນກອງປະຊຸມໃຫ້ມີຄວາມເປັນກາງ, ການກະກຽມເນື້ອໃນຕ່າງໆ, ບົດອະທິບາຍ, ດ້ານວຽກງານບໍລິຫານ, ພິທີການ, ການສື່ສານ, ດ້ານພະລາທິການ ແລະ ໂລຊິສຕິກຕ່າງໆໃຫ້ແກ່ການຈັດກອງປະຊຸມລະດັບສາກົນດັ່ງກ່າວ ແລະ ໂດຍເຫັນໄດ້ຄວາມຈຳເປັນຄືແນວນັ້ນ, ກຳມາທິການການຕ່າງປະເທດ ກໍຄືຄະນະຮັບຜິດຊອບແຜນກິດຈະກຳເພື່ອຮັບໃຊ້ກອງປະຊຸມສະມັດຊາໃຫຍ່ໄອປາ ຈຶ່ງໄດ້ຈັດກອງປະຊຸມສຳມະນາຄັ້ງນີ້ ໂດຍເນັ້ນໃສ່ບັນຫາສຳຄັນຄື: ການດຳເນີນກອງປະຊຸມສະມັດຊາໃຫຍ່ໄອປາ ຄັ້ງທີ 45 ວາລະຂອງການປະຊຸມ ແລະ ບັນດາຂັ້ນຕອນຕ່າງໆ; ວິທີເປັນປະທານ ແລະ ການເຂົ້າຮ່ວມກອງປະຊຸມກຳມາທິການ: ພາລະບົດບາດຂອງປະທານກອງປະຊຸມ, ຜູ້ບັນທຶກກອງປະຊຸມ, ຜູ້ແທນ ແລະ ພະນັກງານຊ່ວຍວຽກຂອງປະເທດເຈົ້າພາບ; ການເຮັດຈຳລອງການດຳເນີນກອງປະຊຸມກຳມາທິການການເມືອງ.

ໃນກອງປະຊຸມ, ພາຍຫຼັງທີ່ໄດ້ຮັບຟັງການໃຫ້ບົດຮຽນຄວາມຮູ້ຈາກວິທະຍາກອນຊ່ຽວຊານທີ່ມາຈາກຕ່າງປະເທດແລ້ວ, ບັນດາຜູ້ເຂົ້າຮ່ວມ ກໍໄດ້ສົນທະນາແລກປ່ຽນຄວາມຄິດເຫັນ ແລະ ຕັ້ງຄຳຖາມໃນຫົວຂໍ້ທີ່ມີຄວາມສົນໃຈ; ຈາກນັ້ນ, ກໍໄດ້ມີການເຮັດຈຳລອງກອງປະຊຸມວຽກງານການເມືອງ.

**(ອານຸສອນ ພູມມີທອນ)**

## ສະຫາຍ...

(ຕໍ່ຈາກໜ້າ 1)

ນັບມື້ເປັນຮູບປະທຳ ແລະ ເພື່ອນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ; ວັນທີ 11 ຕຸລາຜ່ານມາທີ່ສະພາແຫ່ງຊາດ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ພົບປະກັບສະຫາຍ ຫຼີ ສຽງ (Li Qiang) ກຳມະການປະຈຳກົມການເມືອງສູນກາງພັກກອມມູນິດຈີນ, ນາຍົກລັດຖະມົນຕີ ໃນໂອກາດທີ່ຢ້ຽມຢາມຢ່າງເປັນທາງການ ແລະ ເຂົ້າຮ່ວມກອງປະຊຸມສຸດຍອດຜູ້ນຳອາຊຽນ ຄັ້ງທີ 44 ແລະ 45 ທີ່ ສປປລາວ ເປັນເຈົ້າພາບ.

ສະຫາຍ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບແລະຕີລາຄາສູງຕໍ່ການມາເຄື່ອນໄຫວວຽກງານຄັ້ງນີ້, ອວຍພອນ ແລະ ຊົມເຊີຍຢ່າງສຸດໃຈຕໍ່ວັນຊາດ ສປຈີນ ຄົບຮອບ 75 ປີ ທີ່ຫາກໍສະເຫຼີມສະຫຼອງຜ່ານມາບໍ່ພໍເທົ່າໃດວັນ ; ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ພອນໄຊອັນປະເສີດ ໂດຍຜ່ານສະຫາຍນາຍົກລັດຖະມົນຕີ ໄປຍັງສະຫາຍຈ້າວເລີ້ຈີ້ (ZhaoLeji) ປະທານສະພາຜູ້ແທນປະຊາຊົນທົ່ວປະເທດ ແຫ່ງ ສປຈີນ, ຄະນະປະຈຳ ແລະ ສະມາຊິກສະພາຜູ້ແທນປະຊາຊົນທົ່ວປະເທດຈີນ. ພ້ອມນັ້ນ, ສະຫາຍ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ຢືນຢັນວ່າ ສະພາແຫ່ງຊາດລາວ ຈະສືບຕໍ່ຈັດຕັ້ງປະຕິບັດເນື້ອໃນແຜນແມ່ບົດສະບັບໃໝ່ ວ່າດ້ວຍການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໄລຍະປີ 2024-2028 ທີ່ສອງການນຳຂອງສອງປະເທດໄດ້ລົງນາມນຳກັນໃນເດືອນຕຸລາ 2023; ພົວພັນແລກປ່ຽນການນຳຂັ້ນສູງ ແລະ ຂັ້ນຕ່າງໆຂອງ 2 ອົງການນິຕິບັນຍັດນຳກັນຢ່າງປົກກະຕິ; ສອງຝ່າຍຈະສືບຕໍ່ຮ່ວມມື, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ປະສານສົມທົບກັນໃນການເຄື່ອນໄຫວວຽກງານໃນເວທີພາກພື້ນ ແລະ ສາກົນ ທັງປະສານງານກັນໃນການສືບຕໍ່ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງສັນຍາແລະບົດບັນທຶກຄວາມເຂົ້າໃຈຕ່າງໆທີ່ສອງຝ່າຍໄດ້ເປັນເອກະພາບ ແລະ ລົງນາມຮ່ວມກັນຜ່ານມາໃຫ້ເປັນຮູບປະທຳ.

ສະຫາຍ ຫຼີ ສຽງ ໄດ້ສະແດງຄວາມຍິນດີທີ່ໄດ້ພົບປະ ແລະ ຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ, ຄຳອວຍພອນແລະຄຳເວົ້າອັນຈົບງາມ ພ້ອມທັງແຈ້ງໃຫ້ຊາບໂດຍຫຍໍ້ສະພາບການທີ່ພົ້ນເດັ່ນຂອງປະເທດຈີນ; ສະແດງຄວາມຊົມ ເຊີຍຕໍ່ຜົນສຳເລັດຂອງການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ຈີນ-ລາວ ທີ່ຍາດມາໄດ້ຕະຫຼອດໄລຍະຜ່ານມາ ເຊິ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ ໝັ້ນຄົງ ຍາວນານ ຕາມທິດ 4 ດີ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ແລະ ການເປັນຄູ່ຮ່ວມຊາຕາກຳສັງຄົມນິຍົມ ຈີນ-ລາວ ໃຫ້ນັບມື້ເປັນຮູບປະທຳ ແລະ ເພື່ອນຳເອົາຜົນປະໂຫຍດສູງສຸດມາສູ່ປະຊາຊົນສອງຊາດ. ສະຫາຍນາຍົກລັດຖະມົນຕີຈີນ ຍັງໄດ້ອວຍພອນໃຫ້ການເປັນປະທານກອງປະຊຸມໄອປາຄັ້ງທີ 45 ທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບໃນມໍ່ໆນີ້ປະສົບຜົນສຳເລັດຢ່າງຈົບງາມ.

**(ນາງ ອາລິນ ສຸພົມມະປະດິດ)**




## ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 3 ຕຸລາຜ່ານມາ, ທ່ານປອ. ໄຊສົມພອນ ພົມວິຫານກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ໂດຍໄດ້ຮັບການຕ້ອນຮັບຈາກທ່ານພູວົງ ວົງຄຳຊາວຄະນະປະຈຳພັກ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ແລະທ່ານບຸນເພັງສີນະວົງພອນ ເລຂາພັກເມືອງ, ເຈົ້າເມືອງຫາດຊາຍຟອງ ເຊິ່ງມີຄະນະພັກ, ອຳນາດການປົກຄອງ, ອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ພະນັກງານ, ທະຫານ-ຕຳຫຼວດ, ພໍ່ແມ່ປະຊາຊົນບັນດາເຜົ່າພາຍໃນເມືອງ ເຂົ້າຮ່ວມຢ່າງຫຼວງຫຼາຍ; ທ່ານບຸນເພັງສີນະວົງພອນ ໄດ້ລາຍງານໃຫ້ຊາບໂດຍຫຍໍ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ການກະກຽມກອງປະຊຸມໃຫຍ່ຂອງອົງຄະນະພັກເມືອງແລະແຜນການຟື້ນຟູຫຼັງໄພພິບັດນ້ຳຖ້ວມໃນໄລຍະທີ່ຜ່ານມາ.

ໂອກາດດັ່ງກ່າວ, ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມວ່າ: ໃນໄລຍະທີ່ປະເທດເຮົາກຳລັງປະສົບກັບໄພທຳມະຊາດທີ່ຮ້າຍແຮງທີ່ເກີດຂຶ້ນຢູ່ຫຼາຍແຂວງລວມທັງຢູ່ເມືອງຫາດຊາຍຟອງນັ້ນສູນກາງພັກ, ສະພາແຫ່ງຊາດ ກໍຄືອຳນາດການປົກຄອງນະຄອນຫຼວງວຽງຈັນ ໄດ້ມີຄວາມເປັນຫ່ວງເປັນໄຍຫຼາຍຕໍ່ພໍ່ແມ່ປະຊາຊົນທີ່ປະສົບກັບໄພນ້ຳຖ້ວມ ໂດຍໄດ້ຄົ້ນຄວ້າອອກນິຕິກຳຕ່າງໆເພື່ອເປັນບ່ອນອີງໃຫ້ບັນດາອົງການຈັດຕັ້ງແຕ່ລະຂັ້ນໃນການຈັດຕັ້ງປະຕິບັດ, ແກ້ໄຂບັນຫາໃນສະພາວະສຸກເສີນ; ພ້ອມກັນນັ້ນ, ກໍໄດ້ຄົ້ນຄວ້າດ້ານງົບປະມານ, ວັດຖຸອຸປະກອນ, ເຂົ້າປາອາຫານ, ເຄື່ອງໃຊ້, ຢາປົວພະຍາດ ເພື່ອສົ່ງມາຊ່ວຍອຳນາດການປົກຄອງ ກໍຄືພໍ່ແມ່ປະຊາຊົນ; ໄດ້ເຕົ້າໂຮມບັນດາອຸປະກອນ, ເຄື່ອງມື, ພາຫະນະ ທີ່ນຳໃຊ້ເຂົ້າໃນການຕ້ານໄພນ້ຳຖ້ວມ ເພື່ອສະກັດກັ້ນບັນຫານ້ຳຖ້ວມໃຫ້ສົ່ງຜົນກະທົບຕໍ່ພໍ່ແມ່ປະຊາຊົນໜ້ອຍທີ່ສຸດ. ຈາກຄວາມພະຍາຍາມຂອງທຸກພາກສ່ວນເຮັດໃຫ້ການແກ້ໄຂບັນຫາໄພນ້ຳຖ້ວມ ໄດ້ຮັບຜົນສຳເລັດ, ລະດັບນ້ຳຫຼຸດລົງເປັນກ້າວໆ. ການແກ້ໄຂບັນຫາໄພນ້ຳຖ້ວມມາຮອດປັດຈຸບັນ ໄດ້ກັບຄືນສູ່ສະພາບປົກກະຕິແລ້ວ, ແຕ່ກໍຍັງມີບາງວຽກງານທີ່ຈະຕ້ອງໄດ້ສືບຕໍ່ຊ່ວຍພໍ່ແມ່ປະຊາຊົນ ຈຶ່ງສະເໜີໃຫ້ອຳນາດການປົກຄອງນະຄອນຫຼວງວຽງຈັນ ແລະ ເມືອງຫາດຊາຍຟອງ ປຸກລະດົມກຳລັງແຮງຂອງພະນັກງານ, ທະຫານ, ຕຳຫຼວດ, ນັກຮຽນ-ນັກສຶກສາ, ປະຊາຊົນທຸກທົ່ວໜ້າ ໃນການປົວແປງເຮືອນຊານ, ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ ທີ່ຖືກນ້ຳຖ້ວມ ດ້ວຍການເຮັດອະນາ ໄມ, ປັບປຸງບ່ອນເປ່ເພ ໃຫ້ກັບຄືນສູ່ສະພາບປົກກະຕິ ແລະ ສາມາດນຳໃຊ້ໄດ້ໂດຍໄວ; ເກັບກຳຂໍ້ມູນຄວາມເສຍຫາຍໃນດ້ານຕ່າງໆເປັນຕົ້ນລະບົບຊົນລະປະທານ, ເນື້ອທີ່ເຮັດການຜະລິດກະສິກຳ, ສັດລ້ຽງ ແລະ ອື່ນໆ ເພື່ອຄົ້ນຄວ້າມາດຕະການຊ່ວຍພໍ່ແມ່ປະຊາຊົນທີ່ຖືກຜົນກະທົບຈາກໄພນ້ຳຖ້ວມທັນເວລາ ແລະ ທັນລະດູການຜະລິດ; ເກັບກຳຂໍ້ມູນຄວາມເສຍຫາຍດ້ານຖະໜົນຫົນທາງ, ລະບົບສາຍສົ່ງໄຟຟ້າ, ລະບົບໂທລະຄົມມະນາຄົມເພື່ອຮີບຮ້ອນປັບປຸງ, ແກ້ໄຂ ບໍ່ໃຫ້ພໍ່ແມ່ປະຊາຊົນຖືກຕັດຂາດຈາກສິ່ງອຳນວຍຄວາມສະດວກທີ່ຈຳເປັນພື້ນຖານໃນການດຳລົງຊີວິດເປັນເວລາດົນນານ; ຈັດຕັ້ງໜ່ວຍງານແພດໝໍເປັນສູນລວມເຝົ້າລະວັງແລະຕິດຕາມສຸຂະພາບຂອງປະຊາຊົນໃຫ້ດີ, ວາງແຜນການກວດກາສຸຂະພາບ, ການສະໜອງຢາປິ່ນປົວພະຍາດປະເພດຕ່າງໆໃຫ້ທັນເວລາ.

ໃນການເຄື່ອນໄຫວຢ້ຽມຢາມແລະເຮັດວຽກຄັ້ງນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ພ້ອມໄດ້ຄະນະໄດ້ມອບເງິນຊ່ວຍໃຫ້ແກ່ເມືອງຫາດຊາຍຟອງ ຈຳນວນ 200 ລ້ານກີບ ເພື່ອຊຸກຍູ້ເຂົ້າໃນວຽກງານຟື້ນຟູສະພາບຫຼັງໄພພິ ບັດນ້ຳຖ້ວມ ພ້ອມທັງໄປເບິ່ງຄອງລະບາຍນ້ຳປາກຫ້ວຍເດື່ອຢູ່ເຂດຊາຍແດນລະຫວ່າງບ້ານນາໄຮ່-ສີຖານໃຕ້ແລະເຂດກະສິກຳປູກພືດຜັກຢູ່ທາງລຸ່ມບ້ານດອນເກີດ ອີກດ້ວຍ.

**(ອານຸສອນ ພູມມີທອນ**

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ທີ່ກອງປະຊຸມ, ທ່ານນາຍົກລັດຖະມົນຕີສອນໄຊ ສີພັນດອນ ໄດ້ແຈ້ງໃຫ້ຝ່າຍໄອປາຊາບກ່ຽວກັບສະພາບການຂອງອາຊຽນໃນປັດຈຸບັນ ໂດຍສະເພາະຄວາມຄືບໜ້າຂອງການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025 ແລະ ຜົນສຳເລັດການຈັດຕັ້ງປະຕິບັດບັນດາຂົງເຂດບຸລິມະສິດການເປັນປະທານອາຊຽນຂອງ ສປປລາວ ພາຍໃຕ້ຄຳຂວັນ: “ເພີ່ມທະວີການເຊື່ອມຈອດ ແລະ ຄວາມເຂັ້ມແຂງອາຊຽນ” ແນໃສ່ເຮັດໃຫ້ພາກພື້ນມີການເຊື່ອມຈອດແລະມີຄວາມເຂັ້ມແຂງ ເພື່ອນຳໃຊ້ກາລະໂອກາດ ແລະ ຮັບມືກັບສິ່ງທ້າທາຍຕ່າງໆໃນທ່າມກາງສະພາບການຂອງພາກພື້ນ ແລະ ຂອງໂລກ ທີ່ພວມຜັນແປຢ່າງໄວວາ ແລະ ສະຫຼັບຊັບຊ້ອນ; ນອກຈາກນີ້, ທ່ານ ສອນໄຊ ສີພັນດອນກໍໄດ້ແຈ້ງໃຫ້ຊາບຄວາມຄືບໜ້າຂອງການສ້າງບັນດາແຜນຍຸດທະສາດ ເພື່ອຜັນຂະຫຍາຍວິໄສທັດປະຊາຄົມອາຊຽນ 2045 ເຊິ່ງເປັນວິໄສທັດທີ່ກຳນົດທິດທາງຂອງອາຊຽນສຳລັບ 20 ປີຕໍ່ໜ້າ ແນໃສ່ສ້າງປະຊາຄົມອາຊຽນທີ່ເຂັ້ມແຂງ, ມີນະວັດຕະກຳ, ຄ່ອງແຄ້ວ ແລະ ມີປະຊາຊົນເປັນແກນກາງ.

ໃນໂອກາດນີ້, ທ່ານ ປອ. ໄຊສົມພອນ ພົມວິຫານ ກໍໄດ້ແຈ້ງຄວາມຄືບໜ້າຂອງວຽກງານພາຍໃຕ້ຄວາມຮັບຜິດຊອບຂອງໄອປາ ໃຫ້ອາຊຽນຊາບ ແລະນຳສະເໜີຂໍ້ສະເໜີແນະຂອງໄອປາກ່ຽວກັບການສົ່ງເສີມການຮ່ວມມື ເພື່ອເຮັດໃຫ້ອາຊຽນມີການເຊື່ອມຈອດແລະເຂັ້ມແຂງຫຼາຍຂຶ້ນ, ຮັດແຄບຄວາມແຕກໂຕນທາງດ້ານການພັດທະນາ, ການພັດທະນາພື້ນຖານໂຄງລ່າງ, ແລະສົ່ງເສີມການຄ້າ-ການລົງທຶນ ແລະ ການທ່ອງທ່ຽວ ກໍຄືການຮັດແໜ້ນຄວາມເປັນແກນກາງອາຊຽນໃນການຮ່ວມມືກັບພາຍນອກ ເຊິ່ງສອດຄ່ອງກັບບັນດາຂົງເຂດບຸລິມະສິດຂອງອາຊຽນໃນປີ 2024 ທີ່ພວມໄດ້ຮັບການຈັດຕັ້ງປະຕິບັດ.

ພ້ອມນີ້, ບັນດາຜູ້ນຳອາຊຽນໄດ້ສະແດງຄວາມຊົມເຊີຍໄອປາຕໍ່ການປະກອບສ່ວນເຂົ້າໃນຂະບວນການສ້າງປະຊາຄົມອາຊຽນ ແລະ ຫວັງວ່າ ໄອປາຈະສືບຕໍ່ໃຫ້ການສະໜັບສະໜູນແລະປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງຂອງປະຊາຄົມອາຊຽນ ໂດຍສະເພາະແມ່ນການຈັດຕັ້ງປະຕິບັດວິໄສທັດປະຊາຄົມອາຊຽນ 2025, ບັນດາເອກະສານຜົນຂອງກອງປະຊຸມສຸດຍອດອາຊຽນຄັ້ງນີ້ ກໍຄືຄັ້ງຜ່ານມາ ແລະ ວິໄສທັດປະຊາຄົມອາຊຽນ 2045 ທີ່ຈະຖືກຮັບຮອງເອົາໃນປີ 2025 ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

## ສະຫາຍ...

(ຕໍ່ຈາກໜ້າ 1)

ກອມມູນິດຫວຽດນາມ, ນາຍົກລັດຖະມົນຕີ ພ້ອມດ້ວຍຄະນະຜູ້ແທນຂັ້ນສູງຂອງ ສສ.ຫວຽດນາມໃນໂອກາດຢ້ຽມຢາມແລະເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນຄັ້ງທີ 44 ແລະ 45 ທີ່ ສປປລາວ ເປັນເຈົ້າພາບ.

ສະຫາຍປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການມາເຄື່ອນໄຫວວຽກງານຄັ້ງນີ້ ເຊິ່ງເປັນການຮັດແໜ້ນ ແລະ ເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ; ພິເສດການພົບປະສະພາແຫ່ງຊາດມື້ນີ້ ເປັນການສະໜັບສະໜູນ, ຊຸກຍູ້ໃຫ້ການພົວພັນຮ່ວມມືຂອງສອງອົງການນິຕິບັນຍັດສອງປະເທດມີການເສີມຂະຫຍາຍເປັນຮູບປະທຳຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ສະພາແຫ່ງຊາດໃນການເປັນປະທານກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໄດ້ຮັບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ. ນອກນັ້ນ, ຍັງແຈ້ງໃຫ້ຊາບການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດທີ່ໄດ້ຮັບການເສີມຂະຫຍາຍທັງທາງກວ້າງ ແລະ ທາງເລິກສະເໜີມາທັງໃຫ້ຄຳໝັ້ນສັນຍາວ່າຈະຮ່ວມກັບບັນດາສະຫາຍຫວຽດນາມ ສືບຕໍ່ປົກປັກຮັກສາ ແລະ ເພີ່ມພູນຄູນສ້າງສາຍພົວພັນພິເສດທີ່ການນຳຮຸ່ນກໍ່ຕັ້ງໄດ້ທະນຸຖະໜອມມາເປັນເວລາຫຼາຍທົດສະວັດແລະໄດ້ຮັບການເສີມຂະຫຍາຍໂດຍບັນດາການນຳຮຸ່ນຕ່າງໆ, ບັນດານັກຮົບປະຕິວັດ ແລະ ປະຊາຊົນສອງຊາດ ທີ່ໄດ້ທຸ່ມເທດ້ວຍເຫື່ອແຮງເລືອດເນື້ອມາເປັນເວລາຍາວນານນັ້ນ ໄດ້ກາຍເປັນມໍລະດົກລວມອັນລ້ຳຄ່າຂອງສອງຊາດ, ເປັນກົດເກນແຫ່ງການຄົງຕົວແລະຂະຫຍາຍຕົວຂອງສອງປະເທດ ເປັນໜຶ່ງໃນບັນດາປັດໄຈຕັດສິນໄຊຊະນະຂອງການປະຕິວັດຂອງແຕ່ລະປະເທດ ໃຫ້ນັບມື້ນັບມີປະສິດທິຜົນ ແລະ ສວຍສົດງົດງາມຕະຫຼອດໄປ.

ສະຫາຍ ຝ້າມ ມິ່ງ ຈິງ ໄດ້ແຈ້ງໃຫ້ຊາບໂດຍຫຍໍ້ຜົນສຳເລັດຂອງການພົບປະສອງຝ່າຍກັບສະຫາຍນາຍົກລັດຖະມົນຕີສອນໄຊ ສີພັນດອນ ເຊິ່ງໄດ້ຢືນຢັນຮ່ວມກັນຈະຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງຂອງການນຳຂັ້ນສູງຂອງສອງພັກ, ບັນດາຂໍ້ຕົກລົງຂອງສອງລັດຖະບານທີ່ຫາກໍໄດ້ຕົກລົງກັນ ເພື່ອເພີ່ມທະວີການພົວພັນຮ່ວມມືສອງຝ່າຍໃຫ້ເຊື່ອມຈອດກັນທາງດ້ານເສດຖະກິດ, ດ້ານການເງິນ, ດ້ານກົດໝາຍ, ດ້ານພື້ນຖານໂຄງລ່າງ, ດ້ານຄົມມະນາຄົມ, ດ້ານພະລັງງານ, ດ້ານໄຟຟ້າ, ດ້ານໂທລະຄົມ, ດ້ານການທ່ອງທ່ຽວ; ຊຸກຍູ້ ແລະ ລະດົມໃຫ້ບັນດາຄູ່ຮ່ວມມືສາກົນທີ່ເໝາະສົມເຂົ້າມາຮ່ວມມື, ລົງທຶນແລະສະໜັບສະໜູນບັນດາໂຄງການເຊື່ອມຕໍ່ທີ່ເປັນຍຸດທະສາດລະຫວ່າງສອງປະເທດ ໃຫ້ຫຼາຍຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**

## ປະທານ...

(ຕໍ່ຈາກໜ້າ 1)

ອາຊຽນ ຄັ້ງທີ 44 ແລະ 45 ແລະກອງປະຊຸມປິ່ນອ້ອມອື່ນໆ ທີ່ກ່ຽວຂ້ອງ ລະຫວ່າງວັນທີ 8-11 ຕຸລານີ້.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມພາກພູມໃຈທີ່ໄດ້ພົບປະ ແລະ ຊົມເຊີຍຢ່າງຈິງໃຈທີ່ທ່ານ ນາງ ແພທອງທານ ຊິນນະວັດ ໄດ້ຮັບເລືອກໃຫ້ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ແຫ່ງ ລາຊະອານາຈັກໄທ ຄົນໃໝ່ ຄົນທີ 31 ພ້ອມທັງຕີລາຄາສູງຕໍ່ການມາເຄື່ອນໄຫວວຽກງານຄັ້ງນີ້ ເປັນການເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືຖານບ້ານໃກ້ເຮືອນຄຽງທີ່ດີທີ່ມີແຕ່ດົນນານ ບົນພື້ນຖານການເປັນຄູ່ຮ່ວມຍຸດທະສາດລະຫວ່າງສອງປະເທດ ໃຫ້ສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະ ໃຫ້ກຳລັງໃຈແກ່ ສປປລາວ ເຮັດສຳເລັດພັນທະສາກົນໃນການເປັນປະທານອາຊຽນ ກໍຄືເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 45 ໃຫ້ໄດ້ຮັບຜົນສຳເລັດຢ່າງຈົບງາມ; ພ້ອມນີ້, ກໍໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ໄມຕີຈິດມິດຕະພາບຜ່ານທ່ານນາຍົກລັດຖະມົນຕີ ໄປຍັງທ່ານ ວັນມູຫະມັດນໍ ມະທາ ປະທານສະພາຜູ້ແທນລາດສະດອນແຫ່ງລາຊະອານາຈັກໄທ.

ທ່ານ ນາງ ແພທອງທານ ຊິນນະວັດ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ ແລະ ແຈ້ງໃຫ້ຊາບຜົນສຳເລັດການພົບປະຢ່າງເປັນທາງການກັບທ່ານນາຍົກລັດຖະມົນຕີ ສອນໄຊ ສີພັນດອນ ແລະ ການລົງນາມເອກະສານຮ່ວມມືຫຼາຍສະບັບ, ເປັນການສະແດງເຖິງຄວາມມຸ່ງມາດປາຖະໜາຂອງລັດຖະບານສອງປະເທດ ທີ່ມີຄວາມໝາຍໝັ້ນໃນການສືບຕໍ່ເສີມຂະຫຍາຍການພົວພັນຮ່ວມມືທາງດ້ານເສດຖະກິດ, ການເຊື່ອມໂຍງ-ເຊື່ອມຈອດ, ການຄ້າ-ການລົງທຶນ, ການທ່ອງທ່ຽວ, ການຮ່ວມມືເພື່ອການພັດທະນາ, ການສະໜັບສະໜູນເຊິ່ງກັນແລະກັນໃນພາກພື້ນ ແລະ ສາກົນ; ພ້ອມທັງສະແດງຄວາມຍິນດີຈະສືບຕໍ່ຊຸກຍູ້ການພົວພັນຮ່ວມມືສອງຝ່າຍ ໂດຍສະເພາະການຮ່ວມມືຂອງສອງອົງການນິຕິບັນຍັດ ໄທ-ລາວໃຫ້ໄດ້ຮັບໝາກຜົນຍິ່ງໆຂຶ້ນ.

ສຳລັບການພົວພັນລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາໄທ, ສອງຝ່າຍໄດ້ມີການແລກປ່ຽນການຢ້ຽມຢາມຂອງຄະນະຜູ້ແທນຂັ້ນຕ່າງໆ; ແລກປ່ຽນບົດຮຽນ, ປະສົບການ ແລະ ຂໍ້ມູນຂ່າວສານ ໃນການຈັດຕັ້ງປະຕິບັດພາລະບົດບາດອົງການນິຕິບັນຍັດເປັນແຕ່ລະໄລຍະ; ຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນໃນເວທີລັດຖະສະພາພາກພື້ນແລະສາກົນເປັນຕົ້ນ AIPA, IPU, APPF ແລະອື່ນໆ; ຊຸກຍູ້ໃຫ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ຂໍ້ຕົກລົງທີ່ໄດ້ຮ່ວມກັນລົງນາມ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນ.

**(ນາງ ອາລິນ ສຸພົມມະປະດິດ)**



## ປະທານ...

(ຕໍ່ຈາກໜ້າ 1)

ພ້ອມດ້ວຍຄະນະ ໃນໂອກາດມາເຂົ້າຮ່ວມກອງປະຊຸມພົບປະລະຫວ່າງ ຜູ້ນຳອາຊຽນ ແລະ ໄອປາ (ASEAN-AIPA Leaders' Interface) ຢູ່ ສປປລາວ ຕາມການເຊື້ອເຊີນຂອງສະພາແຫ່ງຊາດລາວ ເຊິ່ງເປັນການພົບປະກັນຄັ້ງທຳອິດ.

ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ຕີລາຄາສູງຕໍ່ການພົບປະແລະການເຂົ້າຮ່ວມກອງປະຊຸມຄັ້ງນີ້ ຂອງທ່ານ ໂຈຮາຣິບິນ ອັບດຸນ ແລະ ຄະນະ ເປັນການປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະການຮ່ວມມືອັນດີງາມທີ່ມີມາແຕ່ດົນນານລະຫວ່າງ2ປະເທດລາວ ແລະ ມາເລເຊຍ ກໍຄື ລະຫວ່າງ2ອົງການນິຕິບັນຍັດ ໃຫ້ໄດ້ຮັບການເສີມຂະຫຍາຍຍິ່ງໆຂຶ້ນ ທັງເປັນການສະໜັບສະໜູນ ແລະໃຫ້ກຳລັງໃຈແກ່ສະພາແຫ່ງຊາດລາວ ເຮັດສຳເລັດພັນທະສາກົນໃນການເປັນປະທານໄອປາ ກໍຄືເປັນເຈົ້າພາບກອງປະຊຸມໃຫຍ່ໄອປາ ຄັ້ງທີ 45 ແລະ ກອງປະຊຸມພົບປະລະຫວ່າງຜູ້ນຳອາຊຽນ ແລະ ໄອປາ ໃຫ້ສຳເລັດຜົນຢ່າງຈົບງາມ.

ໃນການພົບປະ, ທັງສອງຝ່າຍໄດ້ພ້ອມກັນຕີລາຄາຄືນການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວກັບລັດຖະສະພາມາເລເຊຍ ໄດ້ມີການພົວພັນຮ່ວມມືທີ່ດີນຳກັນມາໂດຍຕະຫຼອດ ເຊິ່ງສະແດງອອກມີການແລກປ່ຽນຄະນະຜູ້ແທນນຳກັນທັງໃນຂອບສອງຝ່າຍແລະຫຼາຍຝ່າຍເຊັ່ນ: ສອງຝ່າຍ ມີການພົບປະແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ເປັນຕົ້ນດ້ານນິຕິບັນຍັດ, ເສດຖະກິດ, ສັງຄົມ ແລະອື່ນໆ; ສອງຝ່າຍ ສົ່ງສານຊົມເຊີຍ-ສານອວຍພອນເຊິ່ງກັນແລະກັນ ໃນໂອກາດວັນສຳຄັນຕ່າງໆຂອງ 2 ປະເທດ; ຫຼາຍຝ່າຍ ໄດ້ມີການຮ່ວມມື, ສະໜັບສະໜູນແລະຊ່ວຍເຫຼືອເຊິ່ງກັນແລະກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເວທີ AIPA, IPU, APPF ແລະ ອົງການອື່ນໆ. ພ້ອມກັນນັ້ນ, ກໍໄດ້ສະເໜີທິດທາງການພົວພັນຮ່ວມມືໃນຕໍ່ໜ້າຄື: ສືບຕໍ່ແລກປ່ຽນຄະນະຜູ້ແທນຂັ້ນຕ່າງໆລະຫວ່າງສະພາແຫ່ງຊາດລາວກັບລັດຖະສະພາມາເລເຊຍ ເພື່ອແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ ແລະຮ່ວມກັນຈັດສຳມະນາໃນຫົວຂໍ້ຕ່າງໆທີ່ສອງຝ່າຍມີຄວາມສົນໃຈນຳກັນ; ຮ່ວມກັນຊຸກຍູ້ໃຫ້ລັດຖະບານຂອງ 2 ປະເທດ ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ, ບັນດາໂຄງການຮ່ວມມືແລະ ໂຄງການລົງທຶນຕ່າງໆ ທີ່ສອງປະເທດໄດ້ລົງນາມຮ່ວມກັນໃຫ້ມີປະສິດທິພາບ ແລະປະສິດທິຜົນດີ; ພົບປະແລກປ່ຽນຄຳຄິດຄຳເຫັນ ແລະ ປຶກສາຫາລືບັນຫາຕ່າງໆ ໃນໂອກາດເຂົ້າຮ່ວມກອງປະຊຸມຂອງເວທີລັດຖະສະພາພາກພື້ນ ແລະ ສາກົນ.

**(ນາງ ສຸມິນທາ ງາໄຊ)**

## ຮອງປະທານ...

(ຕໍ່ຈາກໜ້າ 4)

ຈຳນວນໜຶ່ງເຮັດໃຫ້ຊີວິດການເປັນຢູ່ນັບມື້ນັບດີຂຶ້ນຢ່າງບໍ່ຢຸດຢັ້ງ.

ທ່ານຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ຍັງໄດ້ຢ້ຽມຢາມ, ຊຸກຍູ້ຫົວໜ່ວຍທຸລະກິດຕົວແບບຂອງແຂວງບໍລິຄຳໄຊຈຳນວນໜຶ່ງ ເປັນຕົ້ນໂຮງງານຜະລິດໝໍ້ແປງໄຟຟ້າ ເອັສເຄ (SK) ທີ່ເມືອງປາກຊັນ ໂດຍການຕ້ອນຮັບຂອງ ທ່ານ ໄຊຍະເພັດ ຈັນທິສອນຜູ້ອຳນວຍການໃຫຍ່ໂຮງງານດັ່ງກ່າວ; ທັງນີ້, ກໍເພື່ອເປັນການຊຸກຍູ້ສົ່ງເສີມ ແລະ ໃຫ້ກຳລັງ ໃຈແກ່ຫົວໜ່ວຍທຸລະກິດທີ່ເປັນຕົວແບບ ໃຫ້ເສີມຂະຫຍາຍມູນເຊື້ອ ແລະ ຕັ້ງໜ້າສືບຕໍ່ປະກອບສ່ວນສ້າງເສດຖະກິດ ຂອງແຂວງຂອງຊາດໃຫ້ເຂັ້ມແຂງຂຶ້ນເລື້ອຍໆ.

ວັນທີ 30 ກັນຍາ, ເຄື່ອນໄຫວຕິດຕາມກວດກາແລະເກັບກຳຂໍ້ມູນຢູ່ກຸ່ມບ້ານມັນຈິ ເມືອງເຊໂປນ ແລະ ກຸ່ມບ້ານພັດທະນາອາສິງ ເມືອງນອງ ໂດຍການຕ້ອນຮັບຂອງການນຳ ແລະ ອຳນາດການປົກຄອງເມືອງ, ສສຂ ປະຈຳເຂດ ເລືອກຕັ້ງເມືອງ ຕະຫຼອດຮອດພໍ່ແມ່ປະຊາຊົນຂອງທັງ 2 ເມືອງ ເຊິ່ງໄດ້ຮັບຟັງການລາຍງານສະພາບລວມໂດຍຫຍໍ້ການ ຈັດຕັ້ງປະຕິບັດວຽກງານ 3 ສ້າງໃນໄລຍະຜ່ານມາ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ລວມທັງຜົນສຳເລັດທີ່ສາມາດຍາດມາ ໄດ້ ໂດຍທີ່ປະຊຸມໄດ້ມີການປຶກສາຫາລື, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ເຊິ່ງເປັນຂໍ້ມູນອັນສຳຄັນໃນການຕິດຕາມກວດກາ.

ວັນທີ 1 ຕຸລາ, ໄດ້ຮ່ວມກັບສະພາປະຊາຊົນແຂວງ ຈັດກອງປະຊຸມຕິດຕາມກວດກາການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໂດຍການເປັນປະທານຮ່ວມຂອງທ່ານ ສົມມາດ ພົລເສນາ ແລະ ທ່ານ ກົງແກ້ວ ມີວໍລະຈັກ ຮອງເລຂາພັກ ແຂວງ, ປະທານ ສພຂ; ມີທ່ານ ນາງ ຫຼິງທອງ ແສງຕາວັນ ຄະນະປະຈຳພັກແຂວງ, ຮອງເຈົ້າແຂວງໆສະຫວັນນະເຂດ ພ້ອມດ້ວຍຫົວໜ້າ-ຮອງຫົວໜ້າພະແນກການຂອງແຂວງເຂົ້າຮ່ວມ. ໃນກອງປະຊຸມ, ທ່ານ ສົມສະໜຸກ ເພັດສົມພູ ຮອງຫົວໜ້າພະແນກພາຍໃນແຂວງ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດການແບ່ງຂັ້ນຄຸ້ມຄອງ ແລະການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນໄລຍະຜ່ານມາ ເຊິ່ງຄະນະພັກ, ອົງການປົກຄອງແຂວງ ໄດ້ແບ່ງຂັ້ນຄຸ້ມຄອງໃຫ້ທ້ອງຖິ່ນຮາກຖານ ເມືອງ ແລະ ບ້ານ ຢ່າງຈະແຈ້ງຂາດຕົວ ພ້ອມທັງຮຽກຮ້ອງໃຫ້ມີການປັບປຸງ, ດັດແກ້ລະບຽບການ, ກົນໄກ ແລະ ນິຕິກຳຈຳນວນໜຶ່ງທີ່ຍັງອັດຕັນ; ພ້ອມດຽວກັນນີ້, ກໍໄດ້ຄົ້ນຄວ້າຄວາມອາດສາມາດ ແລະ ທ່າແຮງຂອງຕົນແນໃສ່ຫຼຸດຜ່ອນການເອື່ອຍອີງໃສ່ບັນດາກະຊວງ-ອົງການຂັ້ນສູນກາງ ທັງເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຕົນເອງ ເຊິ່ງປັດຈຸບັນໃນທົ່ວ ແຂວງ ມີ 33 ພະແນກການ ແລະ ທຽບເທົ່າ, ຂັ້ນເມືອງ ມີ 324 ຫ້ອງການ ແລະ ທຽບເທົ່າ, ໃນນີ້ ຂັ້ນແຂວງໄດ້ສຳເລັດການປັບປຸງພາລະບົດບາດ 100%, ກຳນົດຕຳແໜ່ງງານສຳເລັດແລະຮັບຮອງແລ້ວ 21 ພາກສ່ວນ, ຂັ້ນເມືອງ 118 ຫ້ອງການແລະທຽບເທົ່າ; ໄດ້ລົງຊຸກຍູ້ວຽກງານບໍລິການຜ່ານປະຕູດຽວຢູ່ເມືອງເປົ້າໝາຍໄດ້ 4 ເມືອງຄື: ໄຊບູລີ, ອາດສະພອນ, ສອງຄອນ ແລະ ນະຄອນໄກສອນພົມວິຫານ.

ຕອນບ່າຍຂອງວັນດຽວກັນ, ໄດ້ພົບປະການນຳເມືອງປາກກະດິງແລະພໍ່ແມ່ປະຊາຊົນບ້ານວຽງຄຳ ເມືອງປາກກະດິງ ໂດຍທ່ານ ມັງ ສີບຸນເຮືອງ ເລຂາຄະນະພັກຮາກຖານບ້ານ ໄດ້ແຈ້ງໃຫ້ຊາບວ່າ: ບ້ານວຽງຄຳ ແມ່ນໜຶ່ງໃນ 47 ບ້ານ ຂອງເມືອງປາກກະດິງ, ຫ່າງຈາກສຳນັກງານປົກຄອງເມືອງ31ກິໂລແມັດ ຕາມເສັ້ນທາງເລກທີ 13 ໃຕ້; ມີເນື້ອທີ່ 1,700 ກວ່າເຮັກຕາ, ມີ 815 ຫຼັງຄາເຮືອນ, 695 ຄອບຄົວ, ມີພົນລະເມືອງ 4,626 ຄົນ ຍິງ 2,363 ຄົນ. ສຳລັບວຽກງານ3ສ້າງ, ປະຊາຊົນບ້ານວຽງຄຳ ໄດ້ຮັບການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າແລະການບໍລິການ ເປັນໃຈກາງຂອງການສ້າງບ້ານພັດທະນາ ຕິດພັນກັບການປົກປັກຮັກສາຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ.

ວັນທີ 2 ຕຸລາ ທີ່ຫ້ອງການ ສພຂ ບໍລິຄຳໄຊ, ໄດ້ເຮັດວຽກກັບບັນດາພະແນກການຂອງແຂວງ; ຕາງໜ້າພະແນກພາຍໃນໄດ້ລາຍງານໃຫ້ຮູ້ວ່າ: ການຈັດຕັ້ງປະຕິບັດວຽກງານ 3 ສ້າງຂອງແຂວງນັບແຕ່ປີ 2016 ແມ່ນຈັດຕັ້ງເປັນໄລຍະທີ 2 ຫຼັງຈາກສຳເລັດໄລຍະບົ້ນທົດລອງຢູ່ 3 ເມືອງ ປະກອບມີ 6 ບ້ານ ຄື: 1. ເມືອງປາກຊັນ: ບ້ານສີວິໄລ ແລະ ບ້ານບົວແວງຄຳ, 2. ເມືອງບໍລິຄັນ: ບ້ານສົມສະຫວາດ ແລະ ບ້ານຜາເມືອງ ແລະ 3. ເມືອງວຽງທອງ: ບ້ານນ້ຳຢ້າງ ແລະ ບ້ານຈອມທອງ.

ໃນໄລຍະເຮັດທົດລອງນັ້ນ ແຕ່ລະຂົງເຂດວຽກງານໄດ້ສຸມໃສ່ຈັດຕັ້ງປະຕິບັດການສ້າງບ້ານໃຫ້ມີຄວາມເຂັ້ມແຂງໃນທຸກດ້ານ ໂດຍສະເພາະແມ່ນການປັບປຸງອົງການປົກຄອງບ້ານ ຈາກ 8 ຕຳແໜ່ງງານມາເປັນ 5 ໜ່ວຍງານ, ປັບປຸງຫ້ອງການບ້ານ, ລະບົບການປະຈຳການຂອງຄະນະບ້ານ; ແຕ່ລະຂົງເຂດວຽກງານໄດ້ສຸມໃສ່ພັດທະນາວຽກງານຂອງຕົນເປັນຕົ້ນສ້າງເສດຖະກິດ, ຊີວິດການເປັນຢູ່, ສຸຂະອະນາໄມ, ພື້ນຖານໂຄງລ່າງຖະໜົນຫົນທາງ, ໄຟຟ້າ, ນ້ຳປະປາ, ສົ່ງເສີມການຜະລິດທາງ ດ້ານກະສິກຳ, ຊຸກຍູ້ປ່ອຍເງິນກູ້ບໍ່ມີດອກເບ້ຍເພື່ອເປັນຕົ້ນທຶນການຜະລິດ, ແບ່ງປັນຜົນປະໂຫຍດໃຫ້ບ້ານໃນການເກັບລາຍຮັບ ແລະ ວຽກງານອື່ນໆອີກຫຼາຍດ້ານເພື່ອສ້າງໃຫ້ບ້ານມີຄວາມເຂັ້ມແຂງ ແລະເພື່ອຜັນຂະຫຍາຍວຽກງານແຕ່ລະຂົງເຂດ ລົງສູ່ຮາກຖານໃຫ້ຫຼາຍຂຶ້ນ.

ໃນການເຮັດທົດລອງສາມາດຕີລາຄາຕໍ່ຜົນສຳເລັດໃນຫຼາຍດ້ານ ເຊິ່ງເຫັນໄດ້ຈຸດດີແລະຈຸດອ່ອນ, ທາງຂັ້ນເທິງໄດ້ປັບປຸງນິຕິກຳເພື່ອຜັນຂະຫຍາຍວຽກງານ 3 ສ້າງເຂົ້າສູ່ລວງເລິກ ເຮັດໃຫ້ປະເທດຊາດໄດ້ຮັບການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ທ້ອງຖິ່ນຮາກຖານ ທັງເປັນການປະຕິບັດຕາມແນວທາງຂອງພັກເປັນຕົ້ນແມ່ນໄດ້ປັບປຸງກົດໝາຍວ່າດ້ວຍການ ປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ ມາເປັນສະບັບເລກທີ 68/ສພຊ ໃນປີ2015 ໂດຍປັບປຸງລະບົບການປົກຄອງ ທ້ອງຖິ່ນໃຫ້ສອດຄ່ອງຕາມສະພາບຕົວຈິງ ໂດຍສະເພາະຂັ້ນບ້ານໄດ້ປັບປຸງກົງຈັກຈາກ 8 ຕຳແໜ່ງງານມາເປັນ 5 ໜ່ວຍງານ, ກຳນົດອາຍຸການນາຍບ້ານ, ຮອງນາຍບ້ານ ສະໄໝໜຶ່ງ 5 ປີ ແລະ ອື່ນໆ; ຫຼັງຈາກນັ້ນ, ກະຊວງພາຍໃນໄດ້ນຳມາຈັດຕັ້ງປະຕິບັດຜັນຂະຫຍາຍເປັນນິຕິກຳເປັນຕົ້ນການປັບປຸງກົງຈັກການຈັດຕັ້ງບ້ານ, ກົດລະບຽບບ້ານ, ການເກັບເງິນປະກອບສ່ວນຂອງປະຊາຊົນໃນບ້ານ, ການຈ່າຍເງິນອຸດໜູນໃຫ້ພະນັກງານຂັ້ນບ້ານ; ຂົງເຂດການເງິນແມ່ນການແບ່ງປັນຜົນປະໂຫຍດໃຫ້ບ້ານ, ຂົງເຂດກະສິກຳ ໄດ້ອອກນິຕິກຳກ່ຽວກັບການສ້າງບ້ານໃຫຍ່ໃນຊົນນະບົດໃຫ້ເປັນສີສັນຕົວເມືອງນ້ອຍ ແລະ ຫຼາຍໆຂົງເຂດວຽກງານ, ແຕ່ລະພາກສ່ວນໄດ້ມີການເລີ່ມຈັດຕັ້ງປະຕິບັດຕົວຈິງທັງຖອດຖອນບົດຮຽນ, ເຮັດໃຫ້ວຽກງານ 3 ສ້າງໃນທົ່ວ ແຂວງນັບມື້ນັບດີຂຶ້ນ. ນອກນັ້ນຍັງເຫັນໄດ້ຄວາມຫຍຸ້ງຍາກ, ການຈັດຕັ້ງປະຕິບັດມີຄວາມສັບສົນບໍ່ລະອຽດຈະແຈ້ງ, ຄວາມເຂົ້າໃຈຂອງຫຼາຍພາກສ່ວນຍັງບໍ່ທັນກຳໄດ້, ຍັງມີລັກສະນະແນວຄິດວ່າວຽກງານ 3 ສ້າງ ເປັນວຽກພາຍໃນເທົ່ານັ້ນ ເຮັດໃຫ້ຜົນການພັດທະນາວຽກງານແຕ່ລະຂົງເຂດຍັງບໍ່ພົ້ນເດັ່ນເທົ່າທີ່ຄວນ, ຖ້າສົມທຽບແລ້ວຍັງເຮັດບໍ່ໄດ້ດີເທົ່າກັບໄລຍະເຮັດທົດລອງ ເນື່ອງຈາກໄລຍະປີ 2016-2018 ແມ່ນມີຫຼາຍພາກສ່ວນຮັບຜິດຊອບ ໂດຍແມ່ນຫ້ອງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຂວງເປັນຜູ້ສັງລວມ, ເອກະສານນິຕິກຳກໍມີຫຼາຍ ແຕ່ບໍ່ມີແບບຟອມການປະເມີນ ແລະຮ່າງສະຫຼຸບລາຍງານທີ່ເປັນເອກະພາບໃນທົ່ວປະເທດ; ມາຮອດປີ2018 ວຽກງານດັ່ງກ່າວໄດ້ມອບໃຫ້ຂະແໜງພາຍໃນ ເປັນໃຈກາງການປະສານງານແລະຊຸກຍູ້ຕິດຕາມສັງລວມ, ພາຍຫຼັງສິ້ນສຸດການເຮັດທົດລອງແລ້ວ ແຂວງກໍໄດ້ສະເໜີສ້າງຕື່ມ 20 ບ້ານ ແຕ່ກໍບໍ່ໄດ້ຮັບການຊີ້ນຳຂອງຂັ້ນເທິງ, ແຂວງໄດ້ຕົກລົງເຮັດບ້ານ 3 ສ້າງທົ່ວໄປ ແຕ່ກໍບໍ່ໄດ້ຮັບສ່ວນແບ່ງຜົນປະໂຫຍດ40%-60%.

ປີ 2019 ມີຄຳແນະນຳເລກທີ 05/ພນ, ລົງວັນທີ 31 ທັນວາ 2019, ມີຮ່າງປະເມີນແຂວງ 7 ດ້ານ, ເມືອງ 5 ດ້ານ ແລະບ້ານ 4 ດ້ານ ມີຄວາມເປັນເອກະພາບທົ່ວປະເທດ, ມີການເຝິກອົບຮົມໃຫ້ແຕ່ລະພາກສ່ວນ, ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານແລະສ້າງບ້ານເປັນຫົວໜ່ວຍພັດທະນາ ໄດ້ຮັບການປະເມີນ ໃນປີ 2020; ຄະນະພັກ, ຄະນະນຳຂັ້ນແຂວງ ໄດ້ເອົາໃຈໃສ່ນຳພາຊີ້ນຳຢ່າງໃກ້ຊິດ ໂດຍສະເພາະໄດ້ຜັນຂະຫຍາຍຄຳແນະນຳ ເລກທີ 05/ພນ ມາເປັນຄຳແນະນຳເລກທີ03/ຂບຊ; ຈັດຕັ້ງເຝິກອົບຮົມວິທີ ແລະ ຂັ້ນຕອນການປະເມີນຕາມແບບຟອມ ໃໝ່ໃຫ້ບັນດາພະແນກການ, ອົງການ ແລະ ຂັ້ນເມືອງສຳເລັດ, ແຕ່ງຕັ້ງຄະນະຮັບຜິດຊອບການປະເມີນແລະກອງເລຂາ 3 ສ້າງຊ່ວຍວຽກແຕ່ລະຂັ້ນ ມີບົດບາດເປັນເສນາທິການໃນການສະຫຼຸບສັງລວມວຽກງານ 3 ສ້າງໃຫ້ແກ່ການນຳ ແລະ ໄດ້ຈັດຕັ້ງເຜີຍແຜ່ເຊື່ອມຊຶມນິຕິກຳກ່ຽວກັບວຽກງານ 3 ສ້າງ, ລົງຊຸກຍູ້ ແລະ ຕິດຕາມວິທີການປະເມີນການສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານຕາມ 5 ດ້ານ ແລະສ້າງບ້ານເປັນຫົວໜ່ວຍພັດທະນາຕາມ 4 ດ້ານ ແລະ ຊຸກຍູ້ບັນດາພະແນກການຂອງແຂວງໃນການແບ່ງຂັ້ນຄຸ້ມຄອງ, ມອບສິດ, ມອບວຽກໃຫ້ເມືອງຫຼາຍຂຶ້ນ, ຊັດເຈນຂຶ້ນ ເຮັດໃຫ້ຫຼາຍໜ້າວຽກໄດ້ມີການວາງແຜນ ແລະ ຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ.

ການຈັດຕັ້ງປະຕິບັດວຽກງານ 3 ສ້າງໃນໄລຍະຜ່ານມາເຫັນໄດ້ເຖິງການຈັດຕັ້ງປະຕິບັດວຽກງານຂອງແຕ່ລະຂົງເຂດແມ່ນໄດ້ຮັບການວາງແຜນ, ຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ ແລະ ໄດ້ຮັບໝາກຜົນດີຂຶ້ນເທື່ອລະກ້າວເຮັດໃຫ້ລະບົບການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມແລະວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂອງແຂວງດີ ຂຶ້ນເປັນກ້າວໆ; ຄະນະພັກ, ຄະນະນຳຂັ້ນແຂວງ, ຂັ້ນເມືອງ ແລະຂັ້ນບ້ານ ໄດ້ຮັບຄວາມຮ່ວມມືໃນການເຄື່ອນໄຫວວຽກ ເປັນຢ່າງດີ, ສະແດງອອກໃນການແຕ່ງຕັ້ງຄະນະຮັບຜິດຊອບໃນອົງການຈັດຕັ້ງຂອງຕົນເພື່ອເຄື່ອນໄຫວວຽກງານ ແລະ ພົວພັນປະສານງານເພື່ອສະໜອງຂໍ້ມູນໃຫ້ຄະນະຮັບຜິດຊອບສັງລວມແຕ່ລະຂັ້ນ; ພ້ອມດຽວກັນກໍມີຄວາມເອກະພາບ ຂອງອົງການປົກຄອງແຕ່ລະຂັ້ນ ແລະ ປະຊາຊົນບັນດາເຜົ່າມີຄວາມສາມັກຄີ, ເປັນເຈົ້າການພ້ອມກັນຈັດຕັ້ງປະຕິບັດຢ່າງມີ ຄວາມຮັບຜິດຊອບສູງ.

**(ບຸນເກີດ ວົງໄຊຍາ)**




# ໃຈໜັກໄດ້ກິນເຂົ້າ ໃຈເບົາໄດ້ກິນກອຍ

**# ດົ້ນກົບເມກ**

ການສ້າງຄວາມສຳເລັດໃຫ້ເກີດຂຶ້ນໃນຊີວິດ ນອກຈາກມີມັນສະໝອງຄື: ປັນຍາແລະກຳລັງກາຍທີ່ແຂງ (ສຸຂະພາບດີ) ແລ້ວ ຍັງຕ້ອງການກຳລັງໃຈ ທີ່ສຳຄັນເສີມສ້າງຍູ້ໜູນໃຫ້ຄົນເຮົາສາມາດທົນທານຕໍ່ອຸປະສັກກີດຂວາງລະຫວ່າງທາງທີ່ກ້າວເດີນເຊິ່ງຖ້າວ່າໃຜໃຈອ່ອນແອເຖິງຈະມີປັນຍາດີ-ຮ່າງກາຍດີ ຍ່ອມພ່າຍແພ້ຕໍ່ອຸປະສັກໄດ້ ຄົນບູຮານຈຶ່ງເຕືອນໄວ້ວ່າ: ໃຈໜັກໄດ້ກິນເຂົ້າ ໃຈເບົາໄດ້ກິນກອຍຫົວໃຫຍ່.

ຄົນທີ່ມີຈິດໃຈເຂັ້ມແຂງ ຍ່ອມເປັນຜູ້ທີ່ບໍ່ຫວັ່ນໄຫວຕໍ່ອຸປະສັກຄຳນິນທາ ແລະ ບໍ່ປ່ຽນແປງເປົ້າໝາຍຂອງຊີວິດຕາມຄຳຕິຂອງຜູ້ບໍ່ຫວັງດີ; ໃຈໜັກແໜ້ນຈຶ່ງໝາຍເອົາຜູ້ຕັ້ງໃຈຕໍ່ອຸດົມການ; ຜູ້ມີຄວາມພຽນບໍ່ອ່ອນໄຫວໄປຕາມກະແສລົມປາກຂອງຄົນແວດລ້ອມ ຖ້າໃຜເຄີຍອ່ານເຫັນບົດຮຽນຄວາມສຳເລັດຂອງຄົນດັງຂອງໂລກບາງຄົນ ຈະເຫັນວ່າເຂົາບາງຄົນໄດ້ຜ່ານອຸປະສັກຫຼາຍຄັ້ງກ່ອນຈະສຳເລັດ; ເຂົາຈະທົດສອບ-ທົດລອງ-ປັບປຸງແກ້ໄຂ ຈົນກວ່າຈະສຳເລັດໃນທີ່ສຸດ ນັ້ນຄືຜູ້ມີຄວາມພຽນຄວາມເຊື່ອ ແລະ ຈິດໃຈໜັກແໜ້ນບໍ່ປ່ຽນແປງ.

ການສ້າງຈິດໃຈໃຫ້ໜັກແໜ້ນ ຈຶ່ງຂຶ້ນກັບການສ້າງນິດໄສໃຫ້ມີຄວາມພຽນ ບໍ່ເລີກລະເປົ້າໝາຍທີ່ຕັ້ງໄວ້ ເພາະຖ້າວ່າຄົນໃດມີນິດໄສບໍ່ໝັ້ນຄົງ ຈິດໃຈບໍ່ໜັກແໜ້ນ ກໍຈະກາຍເປັນຄົນຄອນແຄນ ຍ່ອມບໍ່ສາມາດສຳເລັດໃນເປົ້າໝາຍທີ່ຕັ້ງໄວ້ໄດ້ ດັ່ງນັ້ນ, ຄຳວ່າໃຈໜັກແໜ້ນ ຈຶ່ງບໍ່ໝາຍວ່າເຮັດສຳເລັດໜ້າວຽກດຽວ ແຕ່ຕ້ອງສ້າງນິດໄສໃຫ້ດຸໝັ່ນໜັກແໜ້ນຈຶ່ງຈະບັນລຸອຸປະສັກໄດ້.

ເລື່ອງໃຈໜັກໄດ້ກິນ ເຂົ້າໃຈເບົາໄດ້ກິນກອຍຫົວໃຫຍ່ ມັນເປັນຄະຕິສອນໃຫ້ຄົນເຮົາຮູ້ຈັກຄິດ ປັບປຸງຕົນເອງຈາກນ້ອຍໄປຫາໃຫຍ່ ກ້າວໄປສູ່ເປົ້າໝາຍສູງສຸດ ແລະບໍ່ຖືເບົາຫຼືງຕົວເອງວ່າເຮັດສຳເລັດແລ້ວຈະບໍ່ໃຊ້ຄວາມພຽນຕໍ່ໄປ...!






# ວິທີເຮັດວຽກ

**ພາກທີ 6**
**ວິທີນຳ**

ຈຸດພິເສດອັນແຈ່ມແຈ້ງກວ່າໝູ່ຂອງປະຊາຊົນນັ້ນ ແມ່ນເຂົາເຈົ້າມີແນວຄິດປຽບທຽບ. ເຂົາເຈົ້າປຽບທຽບປັດຈຸບັນກັບອະດີດການ. ເຂົາເຈົ້າປຽບທຽບແຕ່ລະວຽກ ແລະ ແຕ່ລະພາກສ່ວນຂອງວຽກດ້ວຍກັນ. ອາໄສການປຽບທຽບນັ້ນ ເຂົາເຈົ້າຮູ້ຈັກບ່ອນຕ່າງກັນ ແລະ ບ່ອນຂັດແຍ້ງກັນນັບໄດ້ຄັກ ແລ້ວອາໄສອັນນັ້ນ ເຂົາເຈົ້າກໍສະຫຼຸບສະພາບການ ແລະ ວາງວິທີການແກ້ໄຂໄດ້ຢ່າງຖືກຕ້ອງ. ປະຊາຊົນປຽບທຽບຖືກແກ້ໄຂຖືກ, ກໍຍ້ອນວ່າຕາຂອງເຂົາເຈົ້າມີຫຼາຍ, ສິ່ງໃດເຂົາເຈົ້າກໍໄດ້ຍິນ, ໄດ້ເຫັນ. ຍ້ອນການປຽບທຽບລະອຽດຖີ່ຖ້ວນນັ້ນ, ວິທີແກ້ໄຂຂອງປະຊາຊົນຍາມໃດກໍກະທັດຮັດຖືກຫຼັກ ແລະ ຍຸດຕິທຳ ກ່ຽວກັບພະນັກງານກໍເຊັ່ນດຽວກັນ, ຜູ້ໃດດີ ຜູ້ໃດຊົ່ວ ຜູ້ໃດເຮັດຜິດພໍຈະແກ້ໄຂໄດ້ ຜູ້ໃດເຮັດສິ່ງໃດດີ ເຮັດວຸ່ນວາຍໂລເລ ປະຊາຊົນກໍຮູ້ໄດ້ຄັກແນ່ ໂດຍອາໄສການປຽບທຽບຂອງເຂົາເຈົ້ານັ້ນ.

ເພາະສະນັ້ນ ປ່ອຍໃຫ້ປະຊາຊົນຕຳໜິຕິຊົມພະນັກງານ ອີງໃສ່ຄຳເຫັນຂອງປະຊາຊົນ ເພື່ອເລື່ອນຊັ້ນພະນັກງານ, ແນ່ນອນຈະບໍ່ເກີດມີຄວາມລຳອຽງເຂົ້າຂ້າງອອກຂາ, ແນ່ນອນຈະເປັນການຍຸດຕິທຳ, ຖືກຫຼັກທີ່ສຸດ ພ້ອມກັນນັ້ນ, ອາໄສການຝຶກຝົນຫຼໍ່ຫຼອມຂອງປະຊາຊົນ ພະນັກງານ ແລະ ປະຊາຊົນເອງກໍຈະກ້າວໜ້າ ແລະ ອາໄສອັນນັ້ນ ພະນັກງານ ແລະ ປະຊາຊົນກໍຈະສາມັກຄີຮັກແພງກັນແໜ້ນແຟ້ນຂຶ້ນຕື່ມ.

ອ່ານຕໍ່ສະບັບໜ້າ...

# ພ້ອມກັນ...

(ຕໍ່ຈາກໜ້າ 1)

ກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ແມ່ນສອດ ຄ່ອງກັບວິໄສທັດ ແລະ ເປົ້າໝາຍ ຂອງແຜນແມ່ບົດປະຊາຄົມອາຊຽນ, ເປັນການເພີ່ມທະວີການ ຈັດຕັ້ງປະຕິບັດນະໂຍບາຍການພັດທະນາຂອງ ສປປລາວ ທີ່ຈະຫັນປ່ຽນຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ກາຍເປັນປະເທດທາງຜ່ານ ແລະ ເຊື່ອມຈອດກັບບັນດາປະເທດໃນພາກພື້ນແລະໃນໂລກ.

ການເປັນປະທານ AIPA ຄັ້ງທີ 45 ຊຶ່ງຈະດຳເນີນໃນລະຫວ່າງ ວັນທີ 17-24 ປີ 2024 ນີ້, ເປັນການເພີ່ມທະວີບົດບາດຂອງ ສປປລາວ ໃນການຮ່ວມມືກັບລັດຖະສະພາສະມາຊິກ AIPA ເພື່ອຊຸກຍູ້ສົ່ງເສີມວຽກງານດັ່ງກ່າວ ໂດຍໄດ້ກຳນົດຫົວຂໍ້; "ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ".

ກອງປະຊຸມຄັ້ງນີ້, ຄະນະຜູ້ແທນບັນດາສະມາຊິກລັດຖະສະພາ AIPA, ຈະໄດ້ລົງເລິກປຶກສາຫາລື ແລະ ຮ່ວມກັນພິຈາລະນາຮັບຮອງເອົາມະຕິຕ່າງໆ ຕາມຂົງເຂດວຽກງານທີ່ກ່ຽວຂ້ອງເຊັ່ນ: ຂົງເຂດວຽກງານການເມືອງ, ວຽກງານເສດຖະກິດ, ວຽກງານສັງຄົມ, ວຽກງານ ສສຊ ເພດຍິງ ແລະວຽກງານສສຊໜຸ່ມAIPA. ນອກຈາກນັ້ນ, ໃນກອງປະຊຸມປິ່ນອ້ອມຕ່າງໆ ຍັງໄດ້ກຳນົດຫົວຂໍ້ ເພື່ອໃຫ້ຄະນະຜູ້ແທນລົງເລິກປຶກສາຫາລືກັນຕື່ມອີກເຊັ່ນ: ກຳມາທິການວຽກງານ ສສຊ ເພດຍິງ ພາຍໃຕ້ຫົວຂໍ້; ສົ່ງເສີມລັດຖະສະພາທີ່ເອົາໃຈໃສ່ບົດບາດຍິງ-ຊາຍເພື່ອປະຊາຄົມອາຊຽນທີ່ເຂັ້ມແຂງ, ເຊື່ອມຈອດ ແລະ ກວມລວມ. ກຳມາທິການວຽກງານ ສສຊ ໜຸ່ມ AIPA ພາຍໃຕ້ຫົວຂໍ້; ສ້າງຄວາມເຂັ້ມແຂງໃຫ້ແກ່ຊາວໜຸ່ມ ໃນການສ້າງປະຊາຄົມອາຊຽນທີ່ປອດໄພ, ເຂັ້ມແຂງແລະກວມລວມ. ກອງປະຊຸມພົບປະກັບຄູ່ຮ່ວມເຈລະຈາ AIPA 23 ປະເທດພາຍໃຕ້ຫົວຂໍ້; ການຮ່ວມມືລັດຖະສະພາເພື່ອກ້າວສູ່ການເຊື່ອມໂຍງ ແລະ ການເຕີບໂຕແບບກວມລວມ. ກອງປະຊຸມປຶກສາຫາລືລະຫວ່າງເລຂາທິການໃຫຍ່ AIPA - ອາຊຽນ ພາຍໃຕ້ຫົວຂໍ້; ເພີ່ມທະວີການການພົວພັນປະສານງານ ແລະການປຶກສາຫາລືລະຫວ່າງ AIPA-ອາຊຽນ. ກອງປະຊຸມສະພາທີ່ປຶກສາຂອງ AIPA ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ ຄັ້ງທີ 7 ເພີ່ມທະວີບົດບາດຂອງລັດຖະສະພາໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດ ເຮັດໃຫ້ອາຊຽນປອດຢາເສບຕິດຢ່າງເປັນຮູບປະທຳ.

ຕາມການລາຍງານຂອງທ່ານ ສັນຍາ ປະເສີດ ປະທານກຳມາທິການຕ່າງປະເທດ ສະພາແຫ່ງຊາດ ຫົວໜ້າອະນຸກຳມະການກອງເລຂາແຫ່ງຊາດ ໃຫ້ຮູ້ວ່າ: ສປປລາວ ກຽມຄວາມພ້ອມໃນການເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ(AIPA) ຄັ້ງທີ 45, ພາຍຫຼັງທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຂຶ້ນກ່າວຮັບເອົາການເປັນປະທານ AIPA ຄັ້ງທີ 45 ຕໍ່ຈາກອິນໂດເນເຊຍ ປະທານ AIPA ຄັ້ງທີ 44 ຢ່າງເປັນທາງການ. ກຳມາທິການການຕ່າງປະເທດ ໄດ້ແຕ່ງຕັ້ງຄະນະກຳມະການຊີ້ນຳລະດັບຊາດ ແລະ ອະນຸກຳມະການຕ່າງໆເພື່ອກະກຽມແລະດຳເນີນການເປັນເຈົ້າພາບກອງປະຊຸມໃຫຍ່ AIPA) ຄັ້ງທີ 45 ຊຶ່ງໄດ້ສຳເລັດກອງປະຊຸມຄະນະສະເພາະກິດຂອງ AIPA ກ່ຽວກັບການສ້າງຄູ່ມືການພົວພັນລະຫວ່າງ AIPA ກັບພາຍນອກ ແລະ ການສ້າງຫ້ອງສະໝຸດກົດໝາຍດິຈິຕອນຂອງAIPA, ກອງປະຊຸມສຳມະນາຂອງສະມາຊິກລັດຖະສະພາເພດຍິງ WAIPA ຄັ້ງທີ 2 ແລະ ກອງປະຊຸມຄະນະປະສານງານ WAIPA. ກອງປະຊຸມຮ່ວມກັນລະຫວ່າງ AIPA-FAO-IISD ຄັ້ງທີ 1-2 ກ່ຽວກັບການຈັດຕັ້ງປະຕິບັດຄູ່ມືຂອງອາຊຽນ ໃນການສົ່ງເສີມການລົງທຶນຢ່າງມີປະສິດທິພາບ ໃນຂະແໜງອາຫານ, ກະສິກຳ ແລະ ປ່າໄມ້, ກອງປະຊຸມສະພາທີ່ປຶກສາໄອປາ ກ່ຽວກັບໄພອັນຕະລາຍຂອງຢາເສບຕິດ(AIPACODD) ຄັ້ງທີ 7 ພາຍໃຕ້ຫົວຂໍ້; "ເພີ່ມທະວີບົດບາດຂອງລັດຖະສະພາໃນການຮ່ວມມືເພື່ອແກ້ໄຂບັນຫາຢາເສບຕິດ ຢ່າງເປັນຮູບປະທຳ", ກອງປະຊຸມສະມາຊິກລັດຖະສະພາໜຸ່ມ (YPA).

ກອງປະຊຸມໃຫຍ່ AIPA ຄັ້ງທີ 45 ຊຶ່ງຈະຈັດຂຶ້ນໃນລະຫວ່າງວັນທີ 17-24 ຕຸລາ 2024 ທີ່ນະຄອນຫຼວງວຽງຈັນ.

ກອງປະຊຸມສະມັດຊາໃຫຍ່ ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ມີຫົວຂໍ້ແລະ ມີເນື້ອໃນສຳຄັນຫຼາຍ, ເພື່ອໃຫ້ສອດຄ່ອງກັບວິໄສທັດ ແລະ ເປົ້າໝາຍ ຂອງແຜນແມ່ບົດປະຊາຄົມອາຊຽນ ທັງເປັນການເພີ່ມທະວີການຈັດຕັ້ງປະຕິບັດນະໂຍບາຍການພັດທະນາຂອງ ສປປລາວ ທີ່ຈະຫັນປ່ຽນຈາກປະເທດທີ່ບໍ່ມີຊາຍແດນຕິດກັບທະເລ ໃຫ້ກາຍເປັນປະເທດທາງຜ່ານ ແລະ ເຊື່ອມຈອດກັບບັນດາປະເທດໃນພາກພື້ນ ແລະ ໃນໂລກ.

ກອງປະຊຸມສະມັດຊາໃຫຍ່ AIPA ຄັ້ງທີ 45 ນີ້, ຈະເປັນໂອກາດດີໃຫ້ແກ່ຜູ້ແທນລັດຖະສະພາສະມາຊິກ AIPA ໄດ້ສະແດງຄວາມຄິດຄວາມເຫັນ ແລະ ແລກປ່ຽນທັດສະນະຂອງຕົນ ເພື່ອຊຸກຍູ້ໃຫ້ວຽກງານດັ່ງກ່າວ ມີຜົນສຳເລັດຕາມຄາດໝາຍທຸກປະການ. ນອກຈາກນັ້ນ, ບົດບາດຂອງລັດຖະສະພາໃນການຊຸກຍູ້ການເຊື່ອມຈອດ ແລະ ການເຕີບໂຕແບບກວມລວມຂອງອາຊຽນ, ຈະເປັນການເພີ່ມທະວີບົດບາດຂອງລັດຖະສະພາ AIPA ໃນການຊຸກຍູ້ສົ່ງເສີມຄວາມພະຍາຍາມຂອງອາຊຽນ ໃຫ້ກ້າວໄປສູ່ປະຊາຄົມທີ່ມີຄວາມສາມັກຄີ, ກວມລວມ, ເຂັ້ມແຂງແລະເຊື່ອມໂຍງ-ເຊື່ອມຈອດ ເປັນຕົ້ນ ແມ່ນທາງດ້ານການຂົນສົ່ງ, ໂທລະຄົມມະນາຄົມ, ພະລັງງານ ແລະອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າ, ການລົງທຶນ, ການຜະລິດ, ການບໍລິການ, ການທ່ອງທ່ຽວ ແລະ ການໄປມາຫາສູ່ກັນຂອງປະຊາຊົນອາຊຽນ, ພ້ອມທັງການເຊື່ອມໂຍງທາງດ້ານເສດຖະກິດ ພາຍໃນອາຊຽນ ແລະ ລະຫວ່າງ ອາຊຽນກັບພາກພື້ນອື່ນ ເພື່ອເຮັດໃຫ້ເສດຖະກິດອາຊຽນມີຄວາມເຂັ້ມແຂງ, ມີການພັດທະນາທີ່ເທົ່າທຽມກັນ, ຮັດແຄບຄວາມແຕກໂຕນຂອງລະດັບການພັດທະນາ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ ໃຫ້ດີຂຶ້ນເທື່ອລະກ້າວ ແລະ ພ້ອມກັນກ້າວໄປຂ້າງໜ້າ ໂດຍບໍ່ປະຖິ້ມໃຜໄວ້ເບື້ອງຫຼັງ.

ຢ່າງໃດກໍຕາມ, ສະພາແຫ່ງຊາດ ແຫ່ງ ສປປລາວ ຖານະເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນ ໄດ້ຕັ້ງໜ້າປະຕິບັດໜ້າທີ່ຂອງຕົນໃນການເປັນປະທານ AIPA ຄັ້ງທີ 45 ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ມີຜົນສຳເລັດຢ່າງຈົບງາມ, ທັງນີ້ກໍເປັນໂອກາດດີທີ່ສຸດ ໃນການຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດວຽກງານ ຂອງລັດຖະບານ ໃນກອບການຮ່ວມມືອາຊຽນ ແລະ ການຮ່ວມມືຂອງອາຊຽນກັບປະເທດອື່ນໆ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກຮ່ວມກັນ ໃນການພັດທະນາເສດຖະກິດ-ສັງຄົມ ແລະ ນຳເອົາຜົນປະໂຫຍດສູງສຸດ ພາຍໃຕ້ກອບການຮ່ວມມືອາຊຽນມາສູ່ປະຊາຊົນລາວບັດດາເຜົ່າຢ່າງທົ່ວເຖິງ ແລະ ເທົ່າທຽມ. ຂໍອວຍພອນໃຫ້ການນຳພັກລັດ ແລະ ປະຊາຊົນລາວບັນດາເຜົ່າຈົ່ງມີສຸຂະພະລານາໄມແຂງແຮງ, ມີຄວາມຜາສຸກ ແລະ ຂໍໃຫ້ພວກເຮົາຮ່ວມແຮງຮ່ວມໃຈກັນ ເປັນເຈົ້າພາບທີ່ດີ ໃນການຈັດກອງປະຊຸມ AIPA ຄັ້ງທີ 45 ໃຫ້ປະສົບຜົນສຳເລັດຢ່າງຈົບງາມ ຕາມລະດັບຄາດໝາຍ.

**(ສີວັນ)**



## ສຸຂະພາບທາຍໂລດ

# 3 ພຶດຕິກຳສ່ຽງຄໍ່ເຂົ່າເສື່ອມ

ໂດຍ: ທິວກະທິ



ອາການເຈັບຄໍ່ເຂົ່າມັກຈະເກີດຂຶ້ນ ຄົນເຮົາອາຍຸຫລາຍຂຶ້ນ ອາດຈະອາຍຸເຂົ້າ 40-50 ຂຶ້ນໄປ ໃຜທີ່ຢູ່ໃນຊ່ວງໄວໜຸ່ມ ກໍຈະບໍ່ຢ້ານປານໃດ ຫຼື ເບິ່ງວ່າມັນເປັນໂຣກທີ່ໄກໂຕຫຼາຍ ແຕ່ມື້ໃດຫາກເກີດອາການເຈັບຄໍ່ເຂົ່າ ເພາະຄໍ່ເຂົ່າເສື່ອມຫຼືສົງໄສວ່າເປັນເພາະຫຍັງ?ເປັນຫຍັງຈຶ່ງເຈັບຄໍ່ເຂົ່າແຕ່ອາຍຸຍັງນ້ອຍ ມື້ນີ້ຈະມາແນະນຳພຶດຕິກຳໃນຊີວິດປະຈຳວັນທີ່ເຮັດໃຫ້ຄໍ່ເຂົ່າເສື່ອມດັ່ງນີ້:

**1. ນັ່ງໃນທ່າທີ່ບໍ່ເໝາະສົມເລື້ອຍໆ:** ບໍ່ວ່າຈະເປັນການນັ່ງງໍເຂົ່າ, ນັ່ງພັບແພບ, ນັ່ງສະມາທິ ຫຼື ນັ່ງຍ່ອງຍໍ້ ຫາກນັ່ງໃນລັກສະນະເຫຼົ່ານີ້ເປັນເວລາດົນ ຫຼື ນັ່ງເລື້ອຍໆ ຈະເຮັດໃຫ້ເກີດແຮງອັດພາຍໃນຄໍ່ເຂົ່າຫຼາຍຂຶ້ນ ເຊິ່ງຈະລົບກວນການນຳສານອາຫານໄປສູ່ເຊວກະດູກອ່ອນ ຈົນເຮັດໃຫ້ເຊວກະດູກອ່ອນເສື່ອມ ແລະ ອາດລາມໄປເຖິງສ່ວນຕ່າງໆຂອງຄໍ່ເຂົ່າອີກເຊັ່ນ: ໝອນຮອງເຂົ່າ, ເອັນຫຸ້ມຄໍ່ເຂົ່າໜາຂຶ້ນ ຫຼື ກະດູກງໍ້ບໍລິເວນປາຍກະດູກເປັນຕົ້ນ.

**2. ໃສ່ເກີບສົ້ນສູງ:** ຜູ້ຍິງທີ່ໃສ່ເກີບສົ້ນສູງເປັນປະຈຳ ຫຼື ອົດທົນໃສ່ເປັນເວລາດົນ ອາດຈະເຮັດໃຫ້ຄໍ່ເຂົ່າເສື່ອມໄວຂຶ້ນ ເພາະໃສ່ເກີບສົ້ນສູງຈະເຮັດໃຫ້ເກີດແຮງກົດທັບຂອງຄໍ່ເຂົ່າຫຼາຍກວ່າປົກກະຕິ ແລະ ຍັງທຳຮ້າຍຂໍ້ນິ້ວຕີນ ທີ່ເປັນອະໄວຍະວະສ່ວນທຳອິດທີ່ຮອງຮັບນ້ຳໜັກໂຕອີກ.

**3. ອ້ວນ ຫລື ຕຸ້ຍ:** ສາເຫດງ່າຍໆທີ່ຫຼາຍຄົນອາດຄາດບໍ່ເຖິງ ຄືນ້ຳໜັກໂຕທີ່ຫຼາຍຂຶ້ນ ເຮັດໃຫ້ຄໍ່ເຂົ່າຮັບນ້ຳໜັກຫຼາຍຂຶ້ນ ບໍ່ວ່າຈະເປັນການຍືນ, ຍ່າງ, ແລ່ນ, ຂຶ້ນຂັ້ນໄດ ຫຼື ກິດຈະກຳຕ່າງໆໃນຊີວິດປະຈຳວັນ ກໍສົ່ງຜົນໃຫ້ຄໍ່ເຂົ່າເສື່ອມໄວໄດ້ເຊັ່ນກັນ.

ດັ່ງນັ້ນ, ຫາກບໍ່ຢາກໃຫ້ຂໍ້ເຂົ່າເສື່ອມໄວຄວນຫຼີກລ່ຽງພຶດຕິກຳທີ່ກ່າວມາຂ້າງເທິງນີ້, ຮັບປະທານອາຫານປະເພດແຄວຊຽມເຊັ່ນ: ນົມ, ປານ້ອຍ, ຖົ່ວ, ງາ, ຜັກກາດນາ, ນ້ຳໝາກກ້ຽງ, ນ້ຳເຕົ້າຮູ້, ປາແຊວມອນ ແລະ ອື່ນໆ ລວມໄປເຖິງການອອກກຳລັງກາຍເປັນປະຈຳ (ໃນປະລິມານທີ່ເໝາະສົມບໍ່ຫັກໂຫມເກີນໄປ) ເທົ່ານີ້ກໍຊ່ວຍຍືດອາຍຸຄໍ່ເຂົ່າຂອງທ່ານໃຫ້ແຂງແຮງ ແລະ ບໍ່ເຈັບງ່າຍໆໄດ້ອີກ.

**ຂໍ້ມູນຈາກ:**
**www.sanook.com**



## ຫົວຫາຍ ສະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

# ສົມທ້ອນ

✻**ຫຍັບ**ຈ່ມໍ່ເຂົ້າມາແລ້ວສຳລັບອັນບຸນອອກພັນສາ ແລະ ບຸນຊ່ວງເຮືອ ເຊິ່ງຫຼາຍທ້ອງຖິ່ນກໍໄດ້ມີການກະກຽມຢ່າງພົດພື້ນ ຫຼາຍບ່ອນຕົບແຕ່ງເອ້ປະດັບລວດລາຍງາມ ຕາມອາຄານທ່າໂຮງ ເດີ່ນອາຮາມກວ້າງ ທັງກະກຽມຊຽນແຕ້ມ ໂຄງກອນການຮ່າຍ ເອົາໄວ້ເຊີ້ງສົ່ງແຮງໃຈພວກອ້າຍ ສີພາຍໂກ້ຍ່າອ່ອນແຮງ **ເຈົ້າເອີຍ!**

✻ **ຂໍ**ຝາກຄຳຫອານຂອບໃຈ ສົ່ງໄປຍັງສາວຄອນສະຫວັນ ເມກສະຫວັນ ສພຂ ສະຫວັນນະເຂດ ແດນໄດໃບເສົາພັນປີ ແລະ ອ້າຍດີລ່າພົບ ຄົນສະພາແຂວງສາລະວັນ ທີ່ໄດ້ຈັດສົ່ງຂອງຕ້ອນ ໃຫ້ກົມສື່ມວນຊົນສະພາແຫ່ງຊາດໄດ້ອີ່ມໜ່ຳຈຶ່ງຊຽນຄຳຍື່ນຕ້ອນກອນສົ່ງຄືນຫາຂອບໃຈເພື່ອນຮ່ວມງານທັງສອງຜ່ານເອທີນີ້ແຂບອີຫຼີເດີຂອງຕ້ອນ ບໍ່ຫຼວງຫຼາຍແຕ່ມີຄ່າ ຂອບໃຈອີກຄັ້ງ ທີ່ຍັງຈ່າຈື່ໄດ້ຂອງຕ້ອນໄທຼຫຼົ່ງລົ້ນ ເລີງເລື້ອຍຕະຫລອດມາ ຂອບໃຈເດີ!

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ຄຶກຄົບບໍ່

ນະງານຊາປະນາກິດສົບແຫ່ງໜຶ່ງ ພິທີກອນກໍາລັງອ່ານຄຸນງາມຄວາມດີຂອງຜູ້ຕາຍ ວ່າເປັນຄົນບໍ່ດື່ມເຫຼົ້າ, ບໍ່ສູບຢາ ແລະ ຮັກຄອບຄົວ ດຸໝັ່ນຫາເງິນຫາຄ່າມາຈຸນເຈືອຄອບຄົວ.

ຜູ້ເປັນເມຍເອີ້ນຫາລູກພ້ອມທັງເວົ້າວ່າ: ທ່າ... ມຶງໄປໄຂຝາໂລງເບິ່ງດຸ ຢູ່ໃນຫັ້ນ ແມ່ນພໍ່ມຶງຢູ່ເບາະ?

**ລູກ:** ເອົ້າ ເຈົ້າຄືວ່າຈັ່ງຊັ້ນ ແມ່?

**ເມຍ:** ກະກູຟັງອັນທີ່ພິທີກອນເວົ້າມາຫັ້ນ ພໍ່ມຶງບໍ່ມີຈັກຂໍ້ເລີຍ ?????????



## ອາດ ກະວີລາວ

# ໄອປາສະພາລາວກ້າວໃໝ່

# ທອງດາ ສຸພາສິດ

**(ມອບແດ່ກອງປະຊຸມໄອປາ ແລະ ກອງປະຊຸມສຸດຍອດອາຊຽນທີ່ ສປປລາວ ເປັນເຈົ້າພາບ)**

✻ ການເວລາລ່ວງເຂົ້າ
ໂລກາຫັນ
ສະພາລາວເດີນກ້າວ
ຜູກສຳພັນຮ່ວມເຂົ້າ
ສັກກະລາດໃໝ່ສອງພັນປາຍ
ປ່ຽນຜັນເດີນໜ້າ
ຕາມຍຸກສະໄໝໃໝ່
ສາກົນກ້າວດຸ່ງເດີນ

✻ ໄອໂປ-ໄອປາກໍ່ຕັ້ງ
ເປັນສະມັດຊາອາຊຽນ
ສະພາລາວເຮົາໄດ້
ທັງຮ່ວມມື ແລະ ເປີດກວ້າງ
ສະພາຊາດອາຄະເນ
ຮ່ວມມືສັນສ້າງ
ຂະຫຍາຍສຳພັນຮ່ວມ
ຍາດໄດ້ມິດສະຫາຍ

✻ ປີນີ້ ເຈົ້າພາບໄດ້
ຍິນດີທັງພູມໃຈ
ກອງປະຊຸມສຳຄັນຄັ້ງ
ເຊີດຊູ ສປປ ລາວ ພຸ່ງພົ້ນ
ເຊັ່ງຊື່ ສປປ ລາວ
ກຽດຕິພູມພຽງພ້ອມ
ໄອປາ-ອາຊຽນທັງຄູ່
ເດີນກ້າວສູ່ຍຸກສະໄໝ

✻ ຮຽມດີໃຈລື່ນລົ້ນ
ສູງເດັ່ນບິນເວທີ
ເດີນໄປຕາມບາດກ້າວ
ໄປຖືກປ່ອງລ່ອງຖືກແປວແນ່ແທ້
ບົດບາດ ສປປລາວ
ເທົ່າທຽມສາກົນໄດ້
ແນວທາງພັກຊີ້ສ່ອງ
ລາວໄດ້ພັດທະນາ

✻ ປີນີ້ ວຽງຈັນແສນມ່ວນແມ້ງ
ມີບັນດາຊາດອາຊຽນ
ສປປ ລາວ ເປັນເຈົ້າ
ນະຄອນຫຼວງສະຫວ່າງແຈ້ງ
ຊຶມຊື່ນຍິນດີ
ປະເທດອື່ນໂຮມເຕົ້າ
ກອງປະຊຸມໂຮມຮ່ວມ
ໂລກາກວ້າງກ່າວຂານ ຊອບແລ້ວ!




## ຄະຕິເຕືອນໃຈ

# ດອກຫຍ້າ

ທີ່ຫຍຸ້ງທີ່ຍາກ
ທີ່ໝັ່ນທີ່ໝອງ
ມັນຫາກຊິດີ
ໃຫ້ໝັ່ນພຽນໝັ່ນປອງ
ໃຫ້ຄ່ອຍຜັດຄ່ອຍສີ
ເມື່ອໜ້າພາຍລຸນ

ລັດຖະສະພາຕ່າງປະເທດ

## Mauritius ຈະເລືອກຕັ້ງສະພານແຫ່ງຊາດໃນວັນທີ 15 ພະຈິກ



(Xinhua) - ສາທາລະນະລັດໂມຣິດ ຫຼື ມໍຣິຊຽດ (Mauritius) ຈະຈັດການເລືອກຕັ້ງສະພານິຕິບັນຍັດຂອງຕົນໃນວັນທີ 10 ພະຈິກນີ້, ສໍານັກງານປະທານາທິບໍດີ ປະກາດໃນວັນສຸກທີ 4 ຕຸລາຜ່ານມາ.

"ໃນການດໍາເນີນການໃຫ້ເປັນໄປຕາມອໍານາດທີ່ໄດ້ມອບໃຫ້ພາຍໃຕ້ມາດຕາ 41 (1) ຂອງກົດໝາຍວ່າດ້ວຍການເປັນຕົວແທນຂອງປະຊາຊົນ (Representation of the People Act) ແລະ ປະຕິບັດຕາມຄໍາແນະນໍາຂອງທ່ານນາຍົກລັດຖະມົນຕີຜູ້ຊົງກຽດ, ພະນະທ່ານ ປະຣິດຖະວິຣາຊສິງ ຣູປັນ (Prithvirajsing Roopun) ປະທານາທິບໍດີແຫ່ງສາທາລະນະລັດ ໄດ້ອອກປະກາດການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ກໍານົດເອົາວັນທີ 22 ຕຸລາ 2024 ເປັນວັນສະເໜີຊື່ (Nomination Day) ແລະ ວັນທີ 10 ພະຈິກ 2024 ເປັນວັນປ່ອນບັດ (Polling Day)." ກ່າວໃນຖະແຫຼງການຂອງປະທານາທິບໍດີ.

ປະທານາທິບໍດີຍັງໄດ້ປະກາດການຍຸບສະພາແຫ່ງຊາດຕັ້ງແຕ່ວັນສຸກທີ 4 ຕຸລາ.

ສະພາແຫ່ງຊາດຂອງໂມຣິດແມ່ນລະບົບສະພາດຽວ, ປະກອບດ້ວຍສະມາຊິກ 70 ທ່ານ ທີ່ມີອາຍຸການ 5 ປີ; ຜູ້ລົງຄະແນນສຽງຈະເລືອກເອົາ ສສຊ ໂດຍກົງ 62 ຄົນ, ໃນຂະນະທີ່ "ຜູ້ພ່າຍແພ້ທີ່ດີທີ່ສຸດ" ອີກ 8 ຄົນ ຈະໄດ້ຮັບການແຕ່ງຕັ້ງໃຫ້ເຕັມ 70 ທີ່ນັ່ງ.

## ກອງປະຊຸມລະດູໃບໄມ້ຫຼົ່ນຄັ້ງທໍາອິດຂອງລັດຖະສະພາມົງໂກນຊຸດປັດຈຸບັນ



ວັນອັງຄານທີ 1 ຕຸລາ 2024 ກອງປະຊຸມປະຈໍາລະດູໃບໄມ້ຫຼົ່ນຄັ້ງທີ 1 ຂອງສະພາຄູຣານໃຫຍ່ (State Great Khural) ລັດຖະສະພາຂອງປະເທດມົງໂກລີ ໄດ້ເປີດຂຶ້ນຢູ່ນະຄອນຫຼວງອູລານບາຕໍ; ນີ້ແມ່ນກອງປະຊຸມຄັ້ງທໍາອິດຂອງສະພາຄູຣານໃຫຍ່ຊຸດປັດຈຸບັນ ທີ່ມີສະມາຊິກ 126 ທ່ານຫຼັງຈາກການເລືອກຕັ້ງຕາມປົກກະຕິໃນເດືອນມິຖຸນາຜ່ານມາ.

ທ່ານດາຊເຊກເວອາມາຣ໌ບາຢາສກາລານ (Dashzegve Amarbayasgalan) ປະທານສະພາຄູຣານໃຫຍ່ ກ່າວໃນການເປີດກອງປະຊຸມວ່າ "ໃນລະຫວ່າງການປະຊຸມ, ພວກເຮົາຈະສຸມໃສ່ການສ້າງສະຖຽນລະພາບທາງດ້ານເສດຖະກິດ, ປັບປຸງຂອບກົດໝາຍການລົງທຶນ, ເພີ່ມການລົງທຶນຈາກຕ່າງປະເທດ, ຫັນເປັນເສດຖະກິດທີ່ມີຫຼາຍດ້ານ ເພື່ອອອກຈາກການເພິ່ງພາອາໄສຂະແໜງການດຽວ (ບໍ່ແຮ່), ສະໜັບສະໜູນຜູ້ປະກອບການພາຍໃນປະເທດ ແລະ ດໍາເນີນການປະຕິຮູບກົດໝາຍເພື່ອຫຼຸດຜ່ອນການແຊກແຊງຂອງລັດຖະບານຕໍ່ເສດຖະກິດ."

ພັກປະຊາຊົນມົງໂກນ ເຊິ່ງເປັນແກນນໍາລັດຖະບານຊຸດປັດຈຸບັນ ໄດ້ຮັບໄຊຊະນະຢ່າງຫວຸດຫວິດໃນການເລືອກຕັ້ງເມື່ອວັນທີ 28 ມິຖຸນາ ໂດຍໄດ້ 68 ທີ່ນັ່ງ, ພັກປະຊາທິປະໄຕໄດ້ 42 ທີ່ນັ່ງ, ພັກ Hun ໄດ້ 8 ທີ່ນັ່ງ; ສ່ວນຝ່າຍຄ້ານ ພັກ Civil Will-Green ແລະ ແນວຮ່ວມແຫ່ງຊາດ ໄດ້ພັກລະ 4 ທີ່ນັ່ງ.

**ແຫຼ່ງຂ່າວ: ຊິນຮວາ**

## ນາຍົກລັດຖະມົນຕີຍີ່ປຸ່ນ ຍຸບສະພາຕໍ່າຫວັງໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນ




(Xinhua) - ສະພາຜູ້ແທນລາດສະດອນ ຫຼື ສະພາຕໍ່າຍີ່ປຸ່ນ ໄດ້ຖືກຍຸບຢ່າງເປັນທາງການເມື່ອວັນພຸດທີ 9 ຕຸລາຜ່ານມາ ເພື່ອເປີດທາງໃຫ້ແກ່ການເລືອກຕັ້ງທົ່ວໄປ, ໃນຂະນະທີ່ນາຍົກລັດຖະມົນຕີ ຊິເງຣຸ ອິຊິບະ (Shigeru Ishiba) ພະຍາຍາມຮັກສາສຽງສ່ວນຫຼາຍໃນສະພາຕໍ່າຂອງພັກຕົນໄວ້ ແລະ ໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນ; ການເລືອກຕັ້ງທົ່ວໄປມີກໍານົດຈັດຂຶ້ນໃນວັນທີ 27 ຕຸລາ ໂດຍກໍານົດເລີ່ມໂຄສະນາຫາສຽງໃນວັນທີ 15 ຕຸລານີ້.

ທ່ານອິຊິບະຊະນະການເລືອກຕັ້ງປະທານພັກເສລີປະຊາທິປະໄຕ (Liberal Democratic Party-LDP) ເຊິ່ງເປັນພັກລັດຖະບານ ເມື່ອວັນທີ 27 ກັນຍາ ແລະ ໄດ້ຮັບເລືອກເປັນນາຍົກລັດຖະມົນຕີ ໃນວັນທີ 01 ຕຸລາຜ່ານມາໃນລັດຖະສະພາທີ່ຄວບຄຸມໂດຍພັກຮ່ວມລັດຖະບານທີ່ນໍາໂດຍພັກ LDP.

ໄລຍະເວລາດັ່ງກ່າວແມ່ນໄລຍະເວລາສັ້ນທີ່ສຸດລະຫວ່າງການດໍາລົງຕໍາແໜ່ງນາຍົກລັດຖະມົນຕີ ແລະ ການຍຸບສະພາຕໍ່າ ໃນປະຫວັດສາດຫຼັງສົງຄາມຂອງຍີ່ປຸ່ນ.

ໃນການຖະແຫຼງຂ່າວຫຼັງຈາກຍຸບສະພາຕໍ່າ, ທ່ານ ອິຊິບະ ອາຍຸ 67 ປີ ເນັ້ນໜັກວ່າ ຫາກປາສະຈາກການອະນຸມັດ ແລະ ຄວາມເຫັນອົກເຫັນໃຈຂອງປະຊາຊົນ, ການເມືອງກໍບໍ່ສາມາດກ້າວໜ້າໄດ້.

ພັກ LDP ທີ່ປົກຄອງຍີ່ປຸ່ນຫຼາຍທີ່ສຸດໃນຍຸກຫຼັງສົງຄາມນັ້ນ, ປັດຈຸບັນມີ 258 ຈາກສະມາຊິກສະພາຕໍ່າທັງໝົດ 465 ທີ່ນັ່ງ ແລະ ບໍລິຫານປະເທດຮ່ວມກັບພັກໂຄເມອິໂຕະ (Komeito) ເຊິ່ງມີ 32 ທີ່ນັ່ງ; ພັກຝ່າຍຄ້ານຕົ້ນຕໍ ແມ່ນພັກປະຊາທິປະໄຕລັດຖະທໍາມະນູນແຫ່ງຍີ່ປຸ່ນ (Constitutional Democratic Party of Japan) ທີ່ນໍາພາໂດຍອະດີດນາຍົກລັດຖະມົນຕີ ໂຢຊິຮິໂກະ ໂນດະ (Yoshihiko Noda) ມີ 99 ທີ່ນັ່ງ.

## ລັດຖະສະພາລັດເວຍ ໃຫ້ສັດຕະຍາບັນການເປັນສະມາຊິກ IEA



(Xinhua)-ວັນພະຫັດທີ 3 ຕຸລາຜ່ານມາ, ລັດຖະສະພາຂອງລັດເວຍ ໄດ້ໃຫ້ສັດຕະຍາບັນການເຂົ້າເປັນສະມາຊິກອົງການພະລັງງານສາກົນ (International Energy Agency-IEA), ເປັນຂັ້ນຕອນສຸດທ້າຍຂອງຂະບວນການດັ່ງກ່າວ; ການເຂົ້າເປັນສະມາຊິກ, ຄາດວ່າຈະຊ່ວຍຄໍ້າປະກັນດ້ານພະລັງງານຂອງລັດເວຍແລະສະໜັບສະໜູນການຫັນປ່ຽນໄປສູ່ພະລັງງານສະອາດ.

ກະຊວງພະລັງງານແລະດິນຟ້າອາກາດ ເນັ້ນໜັກວ່າ ການເຂົ້າເປັນສະມາຊິກ IEA ຈະເພີ່ມທະວີຄວາມໝັ້ນຄົງແຫ່ງຊາດ ໂດຍສະເພາະແມ່ນໃນເວລາທີ່ເກີດວິກິດການ ແລະ ອະນຸຍາດໃຫ້ປະເທດເຂົ້າຮ່ວມການປຶກສາຫາລືນະໂຍບາຍພະລັງງານທົ່ວໂລກນອກເໜືອຈາກສະຫະພາບເອີຣົບ (EU); ສະມາຊິກ IEA ຍັງໄດ້ຮັບຜົນປະໂຫຍດຈາກການເຂົ້າເຖິງການວິເຄາະຂອງຜູ້ຊ່ຽວຊານ, ການຄາດຄະເນແລະຖານຂໍ້ມູນທີ່ສົມບູນແບບຂອງນະໂຍບາຍພະລັງງານທີ່ກວມເອົາທຸກຂະແໜງການ.

ປັດຈຸບັນ, ປະເທດສະມາຊິກ IEA ກວມ 80 ສ່ວນຮ້ອຍຂອງການບໍລິໂພກພະລັງງານທົ່ວໂລກ.

ລັດເວຍ ໄດ້ຮັບການເຊື້ອເຊີນໃຫ້ເຂົ້າຮ່ວມ IEA ໃນປີ 2022.

ເຫັນໄວ້ ໄດ້ຂົດຄຽນ

❖ ວິເສດ ສະແຫວງສຶກສາ

# ບໍ່ໃຊ້ບໍ່ເປັນ ຈະເຫັນແຕ່ໂທດ

ໃນຍຸກໄອທີທີ່ກ້າວໄກໄຮ້ພົມແດນນີ້, ພວກເຮົາມັກຈະໄດ້ຍິນທັງດ້ານດີ ແລະ ທັງດ້ານອັບປີຂອງການນຳໃຊ້ເຕັກໂນໂລຊີ ຫຼື ນະວັດຕະກຳລ້ຳຍຸກດິຈິຕອນນີ້ ເຊັ່ນ ຂ່າວປະເທດນັ້ນປະເທດນີ້ ຫັນເປັນທັນສະໄໝ-ຫັນເປັນດິຈິຕອນ ແລະ ພ້ອມດຽວກັນ ກໍມີຂ່າວເລື່ອງການຈຳກັດຮັດແຄບໃນການນຳໃຊ້ໂທລະສັບມືຖື ກໍຄືການເຂົ້າເຖິງສື່ສັງຄົມອອນລາຍ ໂດຍສະເພາະແມ່ນສຳລັບກຸ່ມຄົນໃນໄວເດັກ. ແຕ່ເມື່ອມາບວກລົບຄູນຫານເລື່ອງລາວຕ່າງໆແລ້ວຈຶ່ງພໍສະຫຼຸບໄດ້ວ່າ ເລື່ອງເຕັກໂນໂລຊີ ຂໍ້ມູນ-ຂ່າວສານນີ້ "ຕ້ອງໃຊ້ໃຫ້ເປັນ ຈຶ່ງເຫັນຄຸນຄ່າ-ຖ້າໃຊ້ບໍ່ເປັນ ຈະເຫັນແຕ່ໂທດ". ຕົວຢ່າງມີຂ່າວໜຶ່ງອອກມາຈາກ**ປະເທດແຟງລັງ(ຟິນແລນ)**ໃນພາກພື້ນເອີຣົບເໜືອວ່າທາງການຂອງປະເທດນີ້ພວມຊຸ້ນຂ຺້ຽວສ້າງກົດລະບຽບເພື່ອຈຳກັດການນຳໃຊ້ໂທລະສັບມືຖື ໂດຍເຫຼົ່ານັກຮຽນໃນໂຮງຮຽນລະດັບປະຖົມ-ມັດທະຍົມ ເພາະເຫັນວ່າເປັນການ "ລົບກວນການຮຽນ-ການສອນ". ທຳລາຍສະມາທິຂອງເດັກນັກຮຽນໃນການຕິດຕາມບົດຮຽນ. ມາດຕະການຈຳກັດນີ້ ຍັງຈະລວມເຖິງການນຳໃຊ້ໂທລະສັບມືຖືໃນເວລາວ່າງສຳລັບເດັກ ແລະ ຊາວໜຸ່ມອີກດ້ວຍ. ກົດລະບຽບທີ່ທາງການແຟງລັງພວມຮ່າງຂຶ້ນຢູ່ນີ້ ແມ່ນເພື່ອອັນທີ່ເອີ້ນວ່າ "ມາດຕະຖານສິ່ງເສີມສຸຂະພາບດິຈິຕອນ" ຂອງເດັກແລະໄວໜຸ່ມ. ກົດລະບຽບນີ້ ຍັງຕ້ອງໄດ້ຜ່ານການຮັບຮອງຈາກລັດຖະສະພາກ່ອນຈະປະກາດໃຊ້ຢ່າງເປັນທາງການ.

ໃນໄລຍະດຽວກັນນີ້, ກໍມີຂ່າວມາຈາກປະເທດ**ອົດສະຕຣາລີ**ວ່າ ນາຍົກລັດຖະມົນຕີຂອງປະເທດນີ້ ໄດ້ປະກາດແຜນການຫ້າມເດັກນ້ອຍໃຊ້ສື່ສັງຄົມອອນລາຍ ແຕ່ຈະມີການອອກກົດໝາຍທີ່ກຳນົດເກນອາຍຸຄັກແນ່ວ່າອາຍຸສ່ຳໃດຫ້າມເດັດຂາດ, ສ່ຳໃດຄວນຈຳກັດເວລາ. ທ່ານນາຍົກອົດສະຕຣາລີ ຊີ້ບອກວ່າ ສື່ສັງຄົມອອນລາຍນີ້ ກໍ່ໃຫ້ເກີດໄພອັນຕະລາຍ 2 ຢ່າງຄື: ຈະເຮັດໃຫ້ເດັກນ້ອຍຂາດການພົວພັນກັບໝູ່ເພື່ອນ ແລະ ຂາດປະສົບການໃນຊີວິດຈິງ. ຂ່າວໃຫ້ຮູ້ຕື່ມວ່າ ໃນເດືອນສິງຫາປີນີ້ ສະຖານີໂທລະພາບແຫ່ງຊາດ ອົດສະຕຣາລີ ໄດ້ເຮັດການສຳຫຼວດຄຳຄິດເຫັນໃນທົ່ວສັງຄົມ ແລະ ໄດ້ພົບວ່າ 61% ຂອງຊາວອົດສະຕຣາລີ ສະໜັບສະໜູນໃຫ້ມີການຈຳກັດການເຂົ້າເຖິງສື່ສັງຄົມອອນລາຍ ສຳລັບຄົນໃນໄວໜຸ່ມທີ່ມີອາຍຸຕ່ຳກວ່າ 17 ປີ ນີ້ລະຄືສາເຫດທີ່ນຳໄປສູ່ການສ້າງກົດໝາຍທີ່ກ່ຽວຂ້ອງ.

ທີ່ປະເທດ**ມາເລເຊຍ**ກໍມີຂ່າວອອກມາໃນຕົ້ນເດືອນກັນຍາປີນີ້ວ່າຜ່ານການສຳຫຼວດໂດຍບໍລິສັດ IPSOS ໄດ້ພົບວ່າຊາວມາເລເຊຍ 71% ເຫັນດີໃຫ້ມີການຈຳກັດການເຂົ້າເຖິງສື່ສັງຄົມອອນລາຍ ສຳລັບກຸ່ມເດັກນ້ອຍອາຍຸຕ່ຳກວ່າ 14 ປີ. IPSOS ແມ່ນບໍລິສັດທີ່ເຮັດໜ້າທີ່ຄົ້ນຄວ້າການຕະຫຼາດ ແລະ ສຳຫຼວດຄວາມຄິດເຫັນລະດັບໂລກ. ທາງບໍລິສັດໄດ້ເຮັດການສຳຫຼວດໃນ 4 ປະເທດຄື: ມາເລເຊຍ, ໄທ, ອິນໂດເນເຊຍ ແລະສິງກະໂປ ກ່ອນຈະມີການເປີດເຜີຍຂໍ້ມູນທີ່ຊີ້ບອກວ່າ ມາເລເຊຍ ເປັນປະເທດທີ່ສອງ ຮອງຈາກອິນໂດເນເຊຍທີ່ມີຄົນອອກຄຳຄິດເຫັນກ່ຽວກັບບັນຫາເດັກກັບການເຂົ້າເຖິງສື່ສັງຄົມອອນລາຍ. ຜົນການສຳຫຼວດຍັງໃຫ້ຂໍ້ມູນລະອຽດເພີ່ມຕື່ມວ່າ 56% ຂອງຊາວມາເລເຊຍ ເຊື່ອວ່າຄູ ແລະ ທາງໂຮງຮຽນຄວນເຮັດໜ້າທີ່ສິດສອນຄວາມຮູ້ດ້ານດິຈິຕອນ ແລະ ຄວາມປອດໄພໃນໂລກອອນລາຍ ສ່ວນ 39% ຄິດວ່າໜ້າທີ່ນີ້ຄວນເປັນຄວາມຮັບຜິດຊອບຂອງຜູ້ປົກຄອງເດັກ.

ຄະນະກຳມະການລະດັບຊາດ
ປັບປຸງລັດຖະທຳມະນູນ
ລັດຖະທຳມະນູນ
ຂໍເຊີນຊວນບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ຈົ່ງປະກອບຄວາມຄິດເຫັນຕໍ່ການປັບປຸງລັດຖະທຳມະນູນ ສະບັບປີ 2015 ເຊິ່ງຄະນະຮັບຜິດຊອບໄດ້ຈັດຕັ້ງໜ່ວຍງານຮັບຄວາມຄິດເຫັນ, ຂໍ້ສະເໜີຜ່ານອີເມວ:
laocon@nalao.la

NCG
NCG FARM
ໂຮງຮຽນ ສັບປັນຍາ SBS SABPANYA SCHOOL
OXC OUDOMXABCHALERN CONSTRUCTION

ທັມພາສາ ຜ່ານສຽງຫົວ



# ໄຊຊະນະທີ່ບໍ່ຄາດຄິດ

*#ບ່າວກະບື*

**ທະ**ນາຍໜຸ່ມພວມຕໍ່ສູ້ເພື່ອປ້ອງກັນນັກທຸລະກິດຮັ່ງຄົນໜຶ່ງ ໃນຄະດີທີ່ຫຍຸ້ງເຫຍິງ. ແຕ່ໂຊກຮ້າຍ, ບັນດາຫຼັກຖານຕ່າງໆລ້ວນແຕ່ບໍ່ເຂົ້າຂ້າງຝ່າຍນັກທຸລະກິດ. ທະນາຍໜຸ່ມຄິດຢ້ານວ່າຊິເສຍຄະດີຢ່າງໜັກໜ່ວງ ສະນັ້ນ ເຂົາຈຶ່ງຖາມຜູ້ຮ່ວມງານອາວຸໂສປະຈຳບໍລິສັດປຶກສາດ້ານກົດໝາຍ ວ່າຈະເປັນການສົມຄວນບໍ່ ທີ່ຈະສົ່ງວິດສະກີ ຈອນນີ ບະລູ (ຈອນນີສີຟ້າ) ໄປຕ້ອນຜູ້ພິພາກສາຈັກສອງສາມແກ້ວ.

ທ່ານຜູ້ຮ່ວມງານ, ຮູ້ສຶກໃຈຂອ້າໃຈຫຼາຍ. ເຂົາເປັ່ງຄຳເວົ້າອອກມາວ່າ: "ຜູ້ພິພາກສາ ເປັນບຸກຄົນທີ່ຊົງກຽດ. ຖ້າເຈົ້າເຮັດແບບນັ້ນ ຂ້ອຍຮັບປະກັນໄດ້ໂລດວ່າ ເຈົ້າຈະຕ້ອງເສຍຄະດີ".

ຜ່ານມາໜຶ່ງອາທິດ, ຜູ້ພິພາກສາພິດຕັດສິນໃຫ້ລູກຄ້າຂອງທະນາຍໜຸ່ມຊະນະຄະດີ. ຜູ້ຮ່ວມງານອາວຸໂສ ເອົາທະນາຍໜຸ່ມໄປລ້ຽງເຂົ້າທ່ຽງເພື່ອຊົມເຊີຍເຂົາ. "ດີໃຈບໍ່ລະ ທີ່ບໍ່ໄດ້ສົ່ງແກ້ວວິດສະກີໄປໃຫ້ຜູ້ພິພາກສາ?" ຜູ້ຮ່ວມງານຖາມ.

ຝ່າຍທະນາຍຕອບວ່າ: "ແຕ່ເຮົາໄດ້ສົ່ງໄປ... ພຽງແຕ່ເຮົາເອົານາມບັດຂອງທະນາຍຂອງຄູ່ກໍລະນີ ຕິດໃສ່ຂວດຕ້ອນດັ່ງກ່າວ".

# Unexpected Victory

*#BAOKBU*

A young lawyer was defending a wealthy businessman in a complicated lawsuit. Unfortunately, the evidence was against his client, and he feared the worst.

So the lawyer asked the senior partner of the law firm if it would be appropriate to send the judge a few bottles of Johnnie Blue Lebel.

The partner was horrified. "The judge is an honorable man." the partner exclaimed. "If you do that, I can guarantee you will lose the case."

A week later, the judge ruled in favor of the lawyer's client. The partner took him to lunch to congratulate him. "Are you glad you didn't send those bottles to the judge", the partner asked.

"But I did send them ""replied the lawyer "I just enclosed the plaintiff's lawyer's business card!"

ຕາມພາສາ ກາຕູນ



ຖິ້ມຂີ້ເຫຍື້ອຊະຊາຍ ທຳລາຍສິ່ງແວດລ້ອມ

● ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

ຄະນະບັນນາທິການ
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

ກອງບັນນາທິການ
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມົ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

ອອກແບບ - ຈັດໜ້າ
ທ່ານ ນາງ ກຸກກິກ ບຸດດາໄຊ